# ເຊໂປນມາຍທູເດ

ໜັງສືຂ່າວ ຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ

## ໃນສະບັບນີ້

ມິຖຸນາ 2023

LXML ບໍ່ຄຳ-ທອງ ເຊໂປນ ໄດ້ຮັບລາງວັນ ທຸລະກິດຊັ້ນນຳດີເດັ່ນ ປະຈຳປີ 2022 ພາຍໃຕ້ການເປັນປະທານ ຂອງ ທ່ານນາຍົກລັດຖະມົນຕີ ໜ້າ 2

LXML ບໍ່ຄຳ-ທອງ ເຊໂປນ ຈັດກອງປະຊຸມປຶກສາຫາລືກັບ ລັດຖະບານລາວ ຄັ້ງທີ 29 ໜ້າ 8

LXML ບໍ່ຄຳ-ທອງ ເຊໂປນ ຜະລິດຄຳໄດ້ 6,7 ໂຕນ ໃນປີ 2022 ໜ້າ 9

ເຊໂປນຈັດກອງປະຊຸມປຶກສາຫາລືເປີດກວ້າງກ່ຽວກັບການຂະຫຍາຍໂຄງການຄຳ ໜ້າ16












# LXML ບໍ່ຄຳ-ທອງ ເຊໂປນ ໄດ້ຮັບກຽດຕິສັກ ຂັ້ນ A+ ຈາກ ກະຊວງພະລັງງານ ແລະ ບໍ່ແຮ່

ເດືອນມັງກອນ 2023, ກະຊວງ ພະລັງງານ ແລະ ບໍ່ແຮ່ ໄດ້ມອບໃບກຽດຕິສັກໃນຂັ້ນ A+ ໃຫ້ແກ່ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (ລຊມລ) ບໍ່ຄຳ-ທອງ ເຊໂປນ ເພື່ອຮັບຮູ້ເຖິງຄຸນງາມຄວາມດີໃນການເປັນຜູ້ນຳໜ້າ ທາງດ້ານການດຳເນີນໂຄງການຂຸດຄົ້ນບໍ່ແຮ່ ໂດຍສອດຄ່ອງກັບມາດຕະຖານສາກົນທາງດ້ານສິ່ງແວດລ້ອມ, ການພັດທະນາຊຸມຊົນທ້ອງຖິ່ນແບບຍືນຍົງ, ການສ້າງວຽກເຮັດງານທຳໄດ້ກວ່າ 5.000 ຕຳແໜ່ງງານ, ພ້ອມທັງໄດ້ມີການປະກອບສ່ວນອັນສຳຄັນ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ຢ່າງຕໍ່ເນື່ອງ.

ໃນຜ່ານມາ ບໍລິສັດ LXML ສາມາດຮັກສາຜົນງານປະເພດສູງທີ່ສຸດນີ້ມາໄດ້ 6 ປີຕິດຕໍ່ກັນຕັ້ງແຕ່ປີ 2016 ເມື່ອລັດຖະບານລາວໄດ້ເລີ່ມປະຕິບັດກົນໄກການປະເມີນນີ້ ເພື່ອຮັບຮູ້ຜົນງານ ແລະ ມາດຕະຖານຂອງບໍລິສັດຕ່າງໆ. ລຊມລ ເປັນບໍລິສັດໜຶ່ງດຽວເທົ່ານັ້ນໃນ ສປປ ລາວ ທີ່ໄດ້ຮັບລຳດັບຊັ້ນອັນຊີງກຽດນີ້.

ກະຊວງພະລັງງານ ແລະ ບໍ່ແຮ່ ມອບໃບກຽດຕິສັກນີ້ ເພື່ອຍ້ອງຍໍ ແລະ ຮັບຮູ້ຜົນງານຂອງ LXML ໃນການປັບປຸງຊີວິດການເປັນຢູ່ທີ່ດີຂຶ້ນຂອງຊຸມຊົນ; ການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ; ການປັດສະຈາກອຸປະຕິເຫດແຮງງານທີ່ຮ້າຍແຮງ, ການສະໜັບສະໜູນຜະລິດຕະພັນ, ການສົ່ງເສີມທຸລະກິດ ແລະ ການບໍລິການທ້ອງຖິ່ນ; ເປັນທຸລະກິດທີ່ມີການຂະຫຍາຍ ແລະ ເຕີບໂຕຢ່າງຕໍ່ເນື່ອງ; ແລະ ໄດ້ສະໜັບສະໜູນການຂະຫຍາຍຕົວຂອງຂະແໜງການອື່ນໆ.

ໃນປະຈຸບັນນີ້, ບໍລິສັດ LXML ແມ່ນກຳລັງພັດທະນາບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດ ຂອງ ສປປ ລາວ ຢູ່ ບໍ່ຄຳ-ທອງ ເຊໂປນ, ເມືອງວິລະບູລີ, ແຂວງສະຫວັນນະເຂດ.

ສິ່ງທີ່ພາໃຫ້ບໍລິສັດ LXML ໄດ້ຮັບໃບກຽດຕິສັກປະເພດ A+ ແມ່ນການປະຕິບັດຕົວຈິງທີ່ຄົບຖ້ວນ ໃນ 7 ຫຼັກການທີ່ກຳນົດຄື: (i) ປະຕິບັດຕາມລະບຽບກົດໝາຍ; (ii) ປະຕິບັດພັນທະຄົບຖ້ວນ; (iii) ເຄົາລົບນັບຖືປະເພດ ແລະ ຊຸມຊົນເຈົ້າພາບ; (iv) ສົ່ງເສີມແຮງງານພາຍໃນ ແລະ ພັດທະນາສີມືທັກສະຂອງແຮງງານ; (v) ຮັກສາມາດຕະຖານດ້ານຄວາມປອດໄພ ແລະ ສຸຂະພາບຢູ່ສະຖານທີ່ເຮັດວຽກ; (vi) ດຳເນີນທຸລະກິດຢ່າງມີສັກກະຍະພາບ ແລະ ຄວາມໂປ່ງໃສ ໂດຍບໍ່ມີຜົນກະທົບຮ້າຍແຮງຕໍ່ສັງຄົມ ແລະ ສິ່ງແວດລ້ອມ; ແລະ (vii) ມີແຜນຄຸ້ມຄອງສິ່ງແວດລ້ອມ ແລະ ແຜນປິດບໍ່.

**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ຂອງ LXML** ໄດ້ກ່າວວ່າ: "ຢູ່ LXML, ພວກເຮົາໝາຍໝັ້ນໃນການປະຕິບັດຕາມມາດຕະຖານປະເທດ ແລະ ສາກົນ ໂດຍສະເພາະດ້ານຄວາມປອດໄພ ແລະ ສິ່ງແວດລ້ອມ."

"ກຽດຕິສັກ ແລະ ການຍ້ອງຍໍທີ່ໄດ້ຮັບມາຢ່າງຕໍ່ເນື່ອງນີ້ ຈະເປັນສິ່ງຕັກເຕືອນ ແລະ ໃຫ້ກຳລັງໃຈໃຫ້ບໍລິສັດຂອງພວກເຮົາໃຫ້ມີການປັບປຸງຢ່າງຕໍ່ເນື່ອງ ພ້ອມທັງເປັນນັກລົງທຶນທີ່ມີຄວາມຮັບຜິດຊອບ ແລະ ເປັນອົງກອນທີ່ດີ ເພື່ອຮັກສາມາດຕະຖານຕ່າງໆຢ່າງເຄັ່ງຄັດ ແລະ ຮັບປະກັນຜົນປະໂຫຍດເພື່ອຜູ້ມີສ່ວນຮ່ວມທຸກພາກສ່ວນ."

ຕັ້ງແຕ່ດຳເນີນການຂຸດຄົ້ນ-ຜະລິດຄຳ-ທອງໃນປີ 2003, ບໍ່ຄຳ-ທອງ ເຊໂປນ ໄດ້ຜະລິດຄຳຫຼາຍກວ່າ 1,5 ລ້ານອອນສ໌ ແລະ ຜະລິດແຜ່ນທອງຫຼາຍກວ່າ 1,1 ລ້ານໂຕນ ອັນໄດ້ປະກອບສ່ວນລາຍຮັບໂດຍກົງຫຼາຍກວ່າ US$1,6 ຕື້ ໃຫ້ແກ່ ສປປ ລາວ ໂດຍຜ່ານການຈ່າຍພາສີ-ອາກອນ, ຄ່າພາສີຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນ ຍັງໄດ້ສ້າງຜົນປະໂຫຍດທາງອ້ອມຫຼາຍຮ້ອຍລ້ານໂດລາ ດ້ວຍການສ້າງວຽກເຮັດງານທຳ, ຜ່ານການຝຶກອົບຮົມຕ່າງໆ, ການພັດທະນາຊຸມຊົນ, ແລະ ການຈ່າຍເງິນໃຫ້ແກ່ ຄູ່ຮ່ວມທຸລະກິດ ແລະ ຜູ້ສະໜອງທ້ອງຖິ່ນ.

ປະຊາຊົນເມືອງວິລະບູລີ ຫຼາຍກວ່າ 40.000 ໄດ້ຮັບຜົນປະໂຫຍດຈາກໂຄງການພັດທະນາຊຸມຊົນຂອງໂຄງການຄຳ-ທອງ ເຊໂປນ ລວມມູນຄ່າ US$20 ລ້ານ ແລະ ລາຍໄດ້ຂອງຊຸມຊົນທ້ອງຖິ່ນຜ່ານ ກຸ່ມທຸລະກິດທ້ອງຖິ່ນທີ່ໄດ້ທະວີຄູນຂຶ້ນເປັນ US$50 ລ້ານ.

# LXML ບໍ່ຄຳ-ທອງ ເຊໂປນ ໄດ້ຮັບລາງວັນ ທຸລະກິດຊັ້ນນຳດີເດັ່ນ ປະຈຳປີ 2022



ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ທ່ານ ມະໄລທອງ ກົມມະສິດ ມອບລາງວັນໃຫ້ແກ່ ຜູ້ອຳນວຍການໃຫຍ່ ລຊມລ ທ່ານ ສະໝານ ອະເນກາ ໃນວັນທີ 23 ມັງກອນ 2023.

**ມັງກອນ 2023 -** ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ບໍ່ຄຳ-ທອງ ເຊໂປນ ແມ່ນໄດ້ເປັນ 1 ໃນ 80 ບໍລິສັດ ທີ່ໄດ້ຮັບລາງວັນ ທຸລະກິດຊັ້ນນຳດີເດັ່ນ ປະຈຳປີ 2022 ສຳຫຼັບການປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມແບບຍືນຍົງ ຂອງ ສປປ ລາວ, ພິທີມອບມອບໂລ້ລາງວັນທຸລະກິດຊັ້ນນຳດີເດັ່ນ ສປປ ລາວ ປະຈຳປີ 2022, ທີ່ນະຄອນຫຼວງວຽງຈັນ, ພາຍໃຕ້ການເປັນປະທານຂອງພະນະ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ. ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ຕາງໜ້າ LXML ຂຶ້ນຮັບລາງວັນອັນຊົງກຽດນີ້.

ໃນປີ 2016, LXML ເຊໂປນ ໄດ້ຮັບສາມລາງວັນຄື: (i) ລາງວັນ 40 ປີ ສຳລັບຜົນງານດີເດັ່ນ ໃນການປະກອບສ່ວນແກ່ ເສດຖະກິດສັງຄົມ, ການຈ້າງງານ ແລະ ຜົນງານການຮັກສາສິ່ງແວດລ້ອມ; (ii) ລາງວັນ ASEAN ສຳລັບການຂຸດຄົ້ນແຮ່ທີ່ດີເລີດ; ແລະ (iii) ລາງວັນ ASEAN ສຳລັບຄວາມຮັບຜິດຊອບທາງດ້ານສັງຄົມ ແລະ ການພັດທະນາຊຸມຊົນ. ເປັນເວລາ 5 ປີຕິດຕໍ່ກັນ ນັບຕັ້ງແຕ່ ປີ 2018 ເປັນຕົ້ນມາ, LXML ໄດ້ຮັບລາງວັນ ສຳລັບການປະກອບສ່ວນທີ່ສຳຄັນໃຫ້ແກ່ພາກທຸລະກິດ ໃນສປປ ລາວ ຢ່າງຕໍ່ເນື່ອງ.

**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML** ໄດ້ກ່າວວ່າ: "ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ພູມໃຈຢ່າງຍິ່ງທີ່ໄດ້ຂຶ້ນມາຮັບລາງວັນນີ້ຕາງໜ້າໃຫ້ພະນັກງານທຸກໆຄົນ ຂອງບໍລິສັດຊີເຟີງ LXML. ກຽດຕິສັກ ແລະ ການຍ້ອງຍໍທີ່ໄດ້ຮັບມານີ້ ຈະເປັນກຳລັງໃຈໃຫ້ບໍລິສັດໄດ້ຕັ້ງໜ້າສືບຕໍ່ເປັນນັກລົງທຶນທີ່ມີຄວາມຮັບຜິດຊອບ ເພື່ອຂະຫຍາຍທຸລະກິດ ແລະ ສ້າງຜົນປະໂຫຍດທີ່ດີ ໃຫ້ແກ່ທຸກພາກສ່ວນກ່ຽວຂ້ອງ."

ນັບຕັ້ງແຕ່ເລີ່ມດຳເນີນການຂຸດຄົ້ນ-ຜະລິດຄຳ-ທອງໃນປີ 2003, ບໍ່ຄຳ-ທອງ ເຊໂປນ ໄດ້ຜະລິດຄຳຫຼາຍກວ່າ 1,5 ລ້ານອອນສ໌ ແລະ ຜະລິດແຜ່ນທອງຫຼາຍກວ່າ 1,1 ລ້ານໂຕນ ອັນໄດ້ປະກອບສ່ວນລາຍຮັບໂດຍກົງຫຼາຍກວ່າ US$1,6 ຕື້ ໃຫ້ແກ່ ສປປ ລາວ ໂດຍຜ່ານການຈ່າຍພາສີ-ອາກອນ, ຄ່າພາສີຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນ ຍັງໄດ້ສ້າງຜົນປະໂຫຍດທາງອ້ອມຫຼາຍຮ້ອຍລ້ານໂດລາ ດ້ວຍການສ້າງວຽກເຮັດງານທຳ, ຜ່ານການຝຶກອົບຮົມຕ່າງໆ, ການພັດທະນາຊຸມຊົນ, ແລະ ການຈ່າຍເງິນໃຫ້ແກ່ ຄູ່ຮ່ວມທຸລະກິດ ແລະ ຜູ້ສະໜອງທ້ອງຖິ່ນ. LXML ໄດ້ລົງທຶນປະມານ US$50 ລ້ານ ໃສ່ການພັດທະນາໂຄງລ່າງພື້ນຖານແຫ່ງຊາດ ແລະ ທ້ອງຖິ່ນ, US$56 ລ້ານໃສ່ການເກັບກູ້ລະເບີດບໍ່ທັນແຕກ ແລະ ຫຼາຍລ້ານໂດລາ ເຂົ້າໃນການອະນຸລັກ ມໍຣະດົກທາງດ້ານວັດທະນະທຳ ແລະ ແຜນງານອື່ນໆ.



# ທ່ານລັດຖະມົນຕີ ກຊສ ແລະ ທ່ານເຈົ້າແຂວງສະຫວັນນະເຂດ ໃຫ້ກຽດເປີດຂົວໃໝ່ ຂ້າມນ້ຳກອກ



**28 ມິຖຸນາ 2022,** ທ່ານ ນາງ ບຸນຄຳ ວໍຣະຈິດ, ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ທ່ານ ສັນຕິພາບ ພົມວິຫານ, ເຈົ້າແຂວງໆສະຫວັນນະເຂດ ໄດ້ຢ້ຽມຢາມພາກສະໜາມເຊໂປນ ໃນວັນທີ 28 ມິຖຸນາ ທີ່ຜ່ານມານີ້.

ການຢ້ຽມຢາມຄັ້ງນີ້ຂອງການນຳ ພ້ອມດ້ວຍຄະນະຈາກກະຊວງພະລັງງານແລະບໍ່ແຮ່ ແລະ ກະຊວງແຜນການ ແລະ ການລົງທຶນ ກໍຄືຂະແໜງການກ່ຽວຂ້ອງຂັ້ນແຂວງ ເປັນສ່ວນໜຶ່ງຂອງການລົງຕິດຕາມກວດກາໂຄງການບໍ່ແຮ່ ໃນແຂວງສະຫວັນນະເຂດ ແລະ ຄຳມ່ວນ.

ໃນໄລຍະການລົງຢ້ຽມຢາມ, ການນຳ ໄດ້ເປີດຂົວຂ້າມນ້ຳກອກໃໝ່ຢ່າງເປັນທາງການ ແລະ ທັງໄດ້ກວດກາວຽກງານຂອງການອ່ວາຍແລວນ້ຳເພື່ອເອື້ອອຳນວຍກິດຈະກຳຂຸດຄົ້ນແຮ່. ຄະນະຢ້ຽມຢາມໄດ້ໃຫ້ຄຳເຫັນວ່າ ການອ່ວາຍແລວນ້ຳຂອງໂຄງການເຊໂປນຈະເປັນຕົວແບບ ແລະ ວາງມາດຕະຖານສຳລັບໂຄງການອື່ນໆໃນ ສປປ ລາວ. ຈຸດປະສົງຂອງການອ່ວາຍແລວນ້ຳ ແມ່ນເພື່ອໃຫ້ສາມາດຂຸດຄົ້ນແຮ່ຄຳ ຄຽງຄູ່ກັບຮັກສາການໄຫຼຂອງແມ່ນ້ຳ ກໍຄື ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈາກການຂຸດຄົ້ນບໍ່ແຮ່. ລະດູຝົນ ໄດ້ສ້າງສິ່ງທ້າທາຍ ແຕ່ວຽກງານການອ່ວາຍແລວນ້ຳ ກໍຍັງສືບຕໍ່ເດີນແມ່ນແລ່ນສະດວກ.

ນອກຈາກນັ້ນ, ຄະນະກໍຍັງໄດ້ຢ້ຽມຢາມ ອຸມົງເພື່ອເຈາະສຳຫຼວດບໍ່ໃຕ້ດິນ ດິສໂຄເວີຣີດີບສ໌, ບໍ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດຂອງ ສປປ ລາວ. ທີມງານໂຄງການເຊໂປນ ໄດ້ນຳພາຄະນະໃນການຊົມ ອຸປະກອນຂຸດຄົ້ນບໍ່ແຮ່ໃຕ້ດິນລ້ຳໜ້າຂອງໂລກ ແລະ ເຕັກນິກການຂຸດຄົ້ນບໍ່ແຮ່ທີ່ທັນສະໄໝ ທີ່ຈະຮັບປະກັນການດຳເນີນງານຢ່າງປອດໄພຢູ່ພາກສະໜາມ.

ໃນຂະນະທີ່ສືບຕໍ່ມີການພັດທະນາໃໝ່ໆ, ໂຄງການເຊໂປນ ກໍຈະໄດ້ຕ້ອນຮັບຄະນະມາຢ້ຽມຢາມພາກສະໜາມຫຼາຍຂຶ້ນ ໃນຕໍ່ໜ້າ.



# ພົບກັບປະທານຂອງພວກເຮົາ, ທ່ານ ກ່າວ ປໍ່ວ



"ທຸກໆສິ່ງທີ່ສະຫຼັບຊັບຊ້ອນ ແມ່ນ ມີຄວາມງ່າຍດາຍຫຼາຍ ແລະ ຄຳຕອບຕໍ່ ບັນຫາໃດໆ ສ່ວນໃຫຍ່ຈະລວມມີ ການເບິ່ງແຍງທຳມະຊາດຂອງມະນຸດ, ການຮັກສິ່ງແວດລ້ອມ, ແລະ ຄວາມປາດຖະໜາໃນຄວາມດີ"

ໃນສະບັບນີ້, ພວກເຮົາຂໍແນະນຳປະທານຄົນໃໝ່ຂອງພວກເຮົາ. ເຖິງແມ່ນວ່າທ່ານຈະຫາກໍມາປະຈຳການໃໝ່ໆຢູ່ LXML, ທ່ານ ກ່າວ ມີປະສົບການກວ່າ 40 ປີໃນອຸດສາຫະກຳບໍ່ແຮ່ ແລະ ມີຄວາມມັກຮັກ-ຜູກພັນກັບວຽກຂອງທ່ານ. ທ່ານ ກ່າວ ຍຶດຖືການເຮັດວຽກຢ່າງເປີດເຜີຍ-ເປີດໃຈ ແລະ ການມີສ່ວນຮ່ວມເປັນພື້ນຖານສຳຄັນໃນຊີວິດການເຮັດວຽກ ແລະ ຊີວິດສ່ວນຕົວ, ແລະ ການເອົາຊະນະຕົນເອງເປັນສິ່ງທ້າທາຍທີ່ໃຫຍ່ທີ່ສຸດ. ທ່ານເຊື່ອວ່າ ບໍ່ຄຳ-ທອງ ເຊໂປນ ມີອະນາຄົດທີ່ສົດໃສ ຍ້ອນການຕັ້ງໜ້າເຮັດວຽກ ແລະ ມີພື້ນຖານທີ່ແຂງແກ່ນຂອງທີມງານເຊໂປນ.

## ຂໍໃຫ້ທ່ານເລົ່າປະສົບການ ຂອງທ່ານໂດຍຫຍໍ້ກ່ອນທີ່ທ່ານຈະໄດ້ມາເປັນສ່ວນໜຶ່ງຂອງບໍລິສັດ ຊີເຟີງ ໂກນ

ຊີວິດການເຮັດວຽກຂອງຂ້າພະເຈົ້າສ່ວນໃຫຍ່ແມ່ນເຮັດວຽກຢູ່ບໍ່ແຮ່. ຂ້າພະເຈົ້າໄດ້ເຮັດວຽກກັບ ບໍລິສັດ ຊາຍນາ ໂກນ, ຫຼັງຈາກນັ້ນກໍແມ່ນ ຊີເຟີງ ໂກນ ໃນຕຳແໜ່ງຜູ້ຈັດການໃຫຍ່ຂອງບໍ່ຄຳ ວູຫຼົງ, ຮານເຟັງມາຍນິງ, ຈິຫຼົງມາຍນິງ, ແລະ ທົວໄຕມາຍນິງ. ກັບ ຊີເຟີງ ໂກນ, ຂ້າພະເຈົ້າໄດ້ດຳລົງຕຳແໜ່ງອຳນວຍການ, ຜູ້ຈັດການໃຫຍ່ ແລະ ໄດ້ເຂົ້າຮ່ວມໃນການກະກຽມ-ດຳເນີນການໃຫ້ບໍລິສັດຊີເຟີງ ເຂົ້າໃນຕະຫຼາດຮຸ້ນຈີນ. ໃນເດືອນມັງກອນ 2023, ຂ້າພະເຈົ້າໄດ້ຂຶ້ນມາເປັນອຳນວຍການ, ຮອງປະທານ ບໍລິສັດຊີເຟີງໂກນ ແລະ ປະທານຂອງ LXML.

ຂ້າພະເຈົ້າມີຄວາມມັກ-ຜູກພັນເລິກເຊິ່ງກັບບໍ່ແຮ່ ແລະ ໃນການເຮັດວຽກກັບບໍ່ແຮ່ຕ່າງໆ.

## ທ່ານເຫັນວ່າ LXML ຈະກ້າວໄປເຖິງຈຸດໃດ ໃນ 5 ປີຂ້າງໜ້າ?

LXML ພວມຈະລິເລີ່ມການປະຕິຮູບຮອບດ້ານ ເພື່ອຫັນຈາກການຂຸດຄົ້ນບໍ່ແຮ່ແບບບໍ່ເປີດ ກ້າວໄປສູ່ ການຂຸດຄົ້ນບໍ່ແຮ່ໃຕ້ດິນ, ຈາກການສຸມໃສ່ພຽງແຕ່ການຜະລິດຄຳ ກ້າວສູ່ການປະສົມປະສານ ການຜະລິດຄຳ ແລະ ທອງ, ແລະ ຈາກການຂຸດຄົ້ນສິນແຮ່ທີ່ປຸງແຕ່ງຍາກ ສູ່ການ ຂະຫຍາຍການຂຸດຄົ້ນບໍ່ແຮ່ທີ່ປຸງແຕ່ງ ກໍຄື ຜະລິດງ່າຍ. ການສຶກສາຄົ້ນຄວ້າກ່ຽວກັບ ມາດຕະການຫລຸດຜ່ອນຕົ້ນທຶນ ແລະ ປັບປຸງປະສິດທິພາບການດຳເນີນງານ ກໍຄື ໂຄງການພັດທະນາໃນອະນາຄົດທີ່ພວກເຮົາພວມຜັກດັນ ຈະເປັນພື້ນຖານທີ່ໜັກແໜ້ນເຂັ້ມແຂງສຳລັບຄວາມຈະເລີນຮຸ່ງເຮືອງຂອງ LXML ໃນ 5 ປີຕໍ່ໜ້າ. ຂ້າພະເຈົ້າເຊື່ອວ່າ ອີກ 5 ປີ, LXML ຈະເປັນບໍ່ແຮ່ທີ່ມີປະສິດທິພາບ, ມີກະແສເງິນສົດທີ່ອຸດົມສົມບູນ ແລະ ມີກຳໄລຫຼາຍກວ່າເກົ່າ. ນອກຈາກນັ້ນ, ພວກເຮົາຈະສືບຕໍ່ປະຕິບັດຄວາມຮັບຜິດຊອບຕໍ່ສັງຄົມ, ສ້າງຄວາມເປັນຢູ່ທີ່ດີສຳລັບຊຸມຊົນທ້ອງຖິ່ນ ແລະ ສ້າງຜົນປະໂຫຍດໃຫ້ພາກສ່ວນທີ່ກ່ຽວຂ້ອງຫຼາຍກວ່າເກົ່າ ຜ່ານການພັດທະນາຂອງ ບໍລິສັດ ຊີເຟີງ.

## ຕະຫຼອດໄລຍະການເຮັດວຽກຂອງທ່ານ, ທ່ານໄດ້ພົບພໍ້ສິ່ງທ້າທາຍໃດແດ່ ແລະ ໄດ້ຜ່ານຜ່າມາໄດ້ແນວໃດ?

ຂ້າພະເຈົ້າພົບພໍ້ສິ່ງທ້າທາຍຫຼາຍປະການຕະຫຼອດໄລຍະການເຮັດວຽກຂອງຂ້າພະເຈົ້າ. ການດຳເນີນໂຄງການບໍ່ແຮ່ ເປັນລະບົບທີ່ສະຫຼັບຊັບຊ້ອນ ທີ່ມາພ້ອມກັບຄວາມທ້າທາຍທັງຈາກພາຍໃນ ແລະ ພາຍນອກໂຄງການ ເຊັ່ນ ການເຂົ້າເຖິງ ແລະ ຄຸ້ມຄອງແຫຼ່ງຊັບພະຍາກອນຕ່າງໆ ເຊັ່ນ ການໄດ້ໃບອະນຸຍາດຕ່າງໆ, ວົງຈອນລາຄາຄຳທີ່ຂຶ້ນໆລົງໆ, ການພົວພັນກັບຊຸມຊົນ, ແລະ ອື່ນໆ. ແຕ່ຂ້າພະເຈົ້າຄິດວ່າ ສິ່ງທ້າທາຍສູງທີ່ສຸດແມ່ນຕົວຂອງຂ້າພະເຈົ້າເອງ. ຢູ່ ຊີເຟີງ ໂກນ, ການເປີດຮັບເອົາຄວາມທ້າທ້າຍຢ່າງຕັ້ງໜ້າ ແລະ ຄວາມກ້າຫານໃນການຕັ້ງເປົ້າໝາຍໃຫ້ສູງຍິ່ງໆຂຶ້ນ ໄດ້ກາຍເປັນວັດທະນະທຳຂອງອົງກອນ. ພວກເຮົາຈະສືບຕໍ່ເຕີບໂຕໄປກັບບໍລິສັດ ດ້ວຍການປະເຊີນກັບຄວາມທ້າທາຍແບບບໍ່ຢຸດຢັ້ງ ແລະ ພວກເຮົາກໍຕ້ອງຍິນດີ-ຂອບໃຈ ກັບທຸກໆໂອກາດຂອງການເຕີບໂຕທີ່ມາກັບຄວາມທ້າທາຍແຕ່ລະຄັ້ງ.

## ໃນຖານະປະທານ LXML, ທ່ານຍຶດຖືຫຼັກການພື້ນຖານໃດ?

ໃນຖານະປະທານ LXML, ຂ້າພະເຈົ້າເຊື່ອວ່າ ຫຼັກການພື້ນຖານແມ່ນ ນ້ຳໃຈຄວາມເປີດເຜີຍ-ການເປີດໃຈ ແລະ ການມີສ່ວນຮ່ວມ. LXML ເປັນຄອບຄົວທີ່ມີພະນັກງານມາຈາກຫຼາຍກວ່າ 20 ປະເທດ. ພວກເຮົາມີພື້ນຖານວັດທະນະທຳ, ປະສົບການຊີວິດ ແລະ ຄວາມລົ້ງເລີຍທີ່ແຕກຕ່າງກັນ, ແຕ່ສິ່ງທີ່ເຮົາມີຮ່ວມກັນແມ່ນ ການມີສ່ວນຮ່ວມ, ເປົ້າໝາຍດຽວກັນ ແລະ ຄວາມເຊື່ອດຽວກັນໃນການພັດທະນາ LXML ໃຫ້ເປັນບ່ອນເຮັດວຽກທີ່ດີ ດ້ວຍນຳພັກນ້ຳແຮງຂອງພວກເຮົາເອງ. ຂ້າພະເຈົ້າຮູ້ສຶກເຫັນໄດ້ ຄວາມພະຍາຍາມຂອງທຸກໆຄົນຢູ່ LXML, ແລະ ຂ້າພະເຈົ້າກໍເຫັນສະພາບແວດລ້ອມທີ່ທຸກໆຄົນຈະຮຽນຮູ້ເຊິ່ງກັນ ແລະ ກັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ມັນເປັນສິ່ງທີ່ເຮັດໃຫ້ຂ້າພະເຈົ້າມີຄວາມສຸກຢ່າງຍິ່ງ.

## ປັດຊະຍາຊີວິດ ແລະ ການເຮັດວຽກຂອງທ່ານແມ່ນຫຍັງ?

ຂ້າພະເຈົ້າເຊື່ອວ່າ ທຸກໆບັນຫາທີ່ສະຫຼັບຊັບຊ້ອນ ຈະມີຄຳຕອບທີ່ງ່າຍດາຍ ຖ້າວ່າພວກເຮົາພ້ອມທີ່ຈະເປີດໃຈ-ຄົ້ນຄວ້າ-ຄົ້ນຫາ. ທັງນີ້ທັງນັ້ນກໍຍ້ອນວ່າ ຫຼັກການທຳອິດຂອງ ທຸກໆສິ່ງທີ່ສະຫຼັບຊັບຊ້ອນ ແມ່ນ ມີຄວາມງ່າຍດາຍຫຼາຍ. ແລະ ຄຳຕອບຕໍ່ບັນຫາໃດໆ ສ່ວນໃຫຍ່ຈະລວມມີ ການເບິ່ງແຍງທຳມະຊາດຂອງມະນຸດ, ການຮັກສິ່ງແວດລ້ອມ, ແລະ ຄວາມປາດຖະໜາໃນຄວາມດີ.

# ປະທານໃໝ່ LXML ພົບປະການນໍາຂອງ ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ



ຫົວໜ້າບໍລິຫານສູງສຸດດ້ານການດໍາເນີນງານຂອງບໍລິສັດ ຊີເຟີງ ໂກນ ທ່ານ ພໍ ແຮຣິສ໌ (ຊ້າຍ), ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ທ່ານໂພໄຊ ໄຊຍະສອນ (ຂວາ), ພົບປະທີ່ກະຊວງ ພະລັງງານ ແລະ ບໍ່ແຮ່ ເມື່ອວັນທີ 1 ພຶດສະພາ 2023.



ຫົວໜ້າບໍລິຫານສູງສຸດດ້ານການດໍາເນີນງານຂອງບໍລິສັດ ຊີເຟີງ ໂກນ ທ່ານ ພໍ ແຮຣິສ໌ (ທີ 4 ຈາກຊ້າຍ), ລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ທ່ານນາງ ບຸນຄໍາ ວໍຣະຈິດ (ທີ 5 ຈາກຊ້າຍ), ປະທານ LXML ທ່ານ ກາວ ໂບ (6 ຈາກຂວາ), ແລະ ຜູ້ອໍານວຍການໃຫຍ່ຂອງ LXML ທ່ານ ສະໝານ ອະເນກາ (ທີ 3 ຈາກຂວາ).

**1 ມິນາ 2023,** ໃນການເຂົ້າຂໍານັບການນໍາພາກລັດ, ປະທານ LXML ທ່ານ ກາວ ປົວ ໄດ້ຢັ້ງຢືນຄວາມມຸ່ງໝັ້ນຂອງບໍລິສັດໃນການປະຕິບັດຕາມມາດຕະຖານສາກົນ ແລະ ການຮັບປະກັນວ່າຜົນປະໂຫຍດຂອງໂຄງການຈະໄດ້ຖືກນໍາມາແບ່ງປັນກັບລັດຖະບານລາວ, ຊຸມຊົນອ້ອມຂ້າງບໍ່ຄໍາ-ທອງ ເຊໂປນ ແລະ ຜູ້ມີສ່ວນຮ່ວມອື່ນໆ.

ທ່ານ ພໍ ແຮຣິສ໌, ອາດີດປະທານ LXML ແລະ ຫົວໜ້າບໍລິຫານສູງສຸດດ້ານການດໍາເນີນງານຂອງບໍລິສັດ ຊີເຟີງ ໂກນ ໄດ້ສະແດງຄວາມຮູ້ບຸນຄຸນມາຍັງລັດຖະບານລາວ ສໍາລັບການສະໜັບສະໜູນຢ່າງແໜ້ນແຟ້ນຕະຫຼອດໄລຍະການດໍາລົງຕໍາແໜ່ງຂອງຕົນ.

**ທ່ານ ໂພໄຊ ໄຊຍະສອນ, ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່** ໄດ້ກ່າວວ່າ: "ບໍລິສັດ ບໍ່ແຮ່ຕ້ອງຖືການພັດທະນາຊຸມຊົນເປັນບູລິມະສິດ ເພື່ອໃຫ້ປະຊາຊົນທ້ອງຖິ່ນ ສາມາດເຂົ້າເຖິງການບໍລິການພື້ນຖານເຊັ່ນເສັ້ນທາງ ແລະ ໄຟຟ້າ ກໍຄືການພັດທະນາ ແລະ ຊີວິດການເປັນຢູ່ທີ່ຍືນຍົງ."

ທ່ານນາງ ບຸນຄໍາ ວໍຣະຈິດ, ລັດຖະມົນຕີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໄດ້ສະແດງຄວາມໝັ້ນໃຈວ່າ ບໍລິສັດ ຊີເຟີງ LXML ບໍ່ຄໍາ-ທອງ ເຊໂປນ ຈະສານຕໍ່ຈາກປະສົບການຂອງຕົນ ເພື່ອຮັກສາມາດຕະຖານດ້ານສິ່ງແວດລ້ອມ ແລະ ເປັນແບບຢ່າງທີ່ດີສໍາລັບ ອຸດສາຫະກໍາບໍ່ແຮ່ສີຂຽວ ຢູ່ໃນ ສປປ ລາວ.

LXML ມຸ່ງໝັ້ນທີ່ຈະສືບຕໍ່ຮ່ວມມືກັບ ລັດຖະບານລາວໃນຖານະຄູ່ຮ່ວມພັດທະນາ ຢູ່ໃນ ສປປ ລາວ.

# ປະທານ ຊີເຟີງ ຂຸດຄົ້ນຄໍາ ຢັ້ງຢືນຄວາມມຸ່ງໝັ້ນໃນການຂະຫຍາຍຕົວຂອງບໍລິສັດ ໃນເວລາຢ້ຽມຢາມ ສປປ ລາວ



ຈິດ, ລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ທ່ານ ບຸນໂຈມ ອຸບົນປະເສີດ ອາດີດ ລັດຖະມົນຕີກະຊວງການເງິນ, ທ່ານ ປອ ດາວວົງ ພອນແກ້ວ, ອາດີດ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ແລະ ທ່ານ ສັນຕິພາບ ພົມວິຫານ ເຈົ້າແຂວງໆສະຫວັນນະເຂດ.

**ທ່ານ ຫວາງ ຈ້ຽນຫົວ** ກ່າວວ່າ: "ການລົງທຶນໃນໂຄງການບໍ່ແຮ່ໃໝ່ ຈະສ້າງຜົນປະໂຫຍດທາງບວກໃຫ້ແກ່ທັງປະຊາຊົນ ແລະ ລັດຖະບານລາວ. ຂ້າພະເຈົ້າມີຄວາມພາກພູມໃຈຕໍ່ຜົນສໍາເລັດຂອງບໍລິສັດ ລຊມລ ໃນ ສປປ ລາວ ໂດຍສະເພາະ ການສ້າງວຽກເຮັດງານທໍາ, ການຝຶກອົບຮົມ, ການພັດທະນາຊຸມຊົນ, ແລະ ການປະກອບສ່ວນສ້າງລາຍຮັບໃຫ້ແກ່ລັດຖະບານລາວ."

ທ່ານ ຫວາງ ຈ້ຽນຫົວ, ປະທານ ບໍລິສັດ ຊີເຟີງ ຂຸດຄົ້ນຄໍາ ໄດ້ຮັບກຽດເຂົ້າຢ້ຽມຂໍານັບການນໍາຂັ້ນສູງ ທີ່ນະຄອນຫຼວງວຽງຈັນ ເພື່ອລາຍງານຄວາມຄືບໜ້າກ່ຽວກັບການລົງທຶນ ແລະ ການປະກອບສ່ວນອັນພົ້ນເດັ່ນຂອງບໍລິສັດຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ ໃນສປປ ລາວ ແລະ ຢັ້ງຢືນແຜນ ສໍາລັບການຂະຫຍາຍຕົວໃນອະນາຄົດ ໃນການຮ່ວມມືກັບລັດຖະບານລາວ. ບໍລິສັດ ຊີເຟີງ ຈີ ຫຼົງ ຂຸດຄົ້ນຄໍາ ໄດ້ຖືຫຸ້ນ 90 ສ່ວນຮ້ອຍ ໃນບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (ລຊມລ) ເຊິ່ງເປັນເຈົ້າຂອງ ແລະ ດໍາເນີນໂຄງການຄໍາ-ທອງ ເຊໂປນ, ເມືອງວິລະບູລີ, ແຂວງສະຫວັນນະເຂດ.

ທ່ານ ຫວາງ ຈ້ຽນຫົວ ຢັ້ງຢືນຄວາມມຸ່ງໝັ້ນຂອງບໍລິສັດ ຊີເຟີງ ໃນການເພີ່ມທະວີສາຍພົວພັນ ແລະ ລົງທຶນໃນ ສປປ ລາວ ເພື່ອພັດທະນາໂຄງການຄໍາ, ທອງ ແລະ ແຮ່ຫາຍາກ ໃນເວລາທີ່ໄດ້ພົບປະຢ່າງອົບອຸ່ນກັບ ພະນະທ່ານ ປອ ໄຊສົມພອນ ພົມວິຫານ, ປະທານສະພາແຫ່ງຊາດ, ພະນະທ່ານ ປອ ສອນໄຊ ສີພັນດອນ, ອາດີດນາຍົກລັດຖະມົນຕີ, ທ່ານນາງ ບຸນຄໍາ ວໍລະ



# LXML ບໍ່ຄໍາ-ທອງເຊໂປນ ມອບອາກອນກໍາໄລຂອງປີ 2022 ມູນຄ່າ ກວ່າ US$14 ລ້ານ ແກ່ລັດຖະບານ

**2 ພຶດສະພາ 2023,** ບໍລິສັດ ຊີເຟີງ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ບໍ່ຄໍາ-ທອງ ເຊໂປນ ຕາງໜ້າໂດຍ ປະທານ LXML ທ່ານ ໂບ ກາວ ແລະ ຜູ້ອໍານວຍການໃຫຍ່ LXML ທ່ານ ສະໝານ ອະເນກາ ໄດ້ມອບອາກອນກໍາໄລຈໍານວນ US$14.682.267,86 ຈາກການຂາຍຜົນຜະລິດຄໍາ ແລະ ທອງໃນສົກປີ 2022. ນອກຈາກອາກອນກໍາໄລ ດັ່ງກ່າວນີ້ແລ້ວ ທາງບໍລິສັດ ກໍຍັງໄດ້ຈ່າຍຄ່າພາສີຊັບພະຍາກອນແຮ່ທາດ, ຄ່າສໍາປະທານ, ເງິນປັນຜົນ, ແລະ ພັນທະທາງດ້ານການເງິນອື່ນໆທີ່ກ່ຽວຂ້ອງ, ເຊິ່ງເມື່ອລວມເຂົ້າກັນແລ້ວ ລັດຖະບານແມ່ນໄດ້ລາຍຮັບ ລວມຍອດທັງໝົດໃນສົກປີ 2022 ເປັນ US$50 ລ້ານ ຈາກ LXML. ການປະກອບສ່ວນເຫຼົ່ານີ້ ຈະສືບຕໍ່ສະໜັບສະໜູນ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ.




ຫົວໜ້າກົມສ່ວຍສາອາກອນ ທ່ານ ບຸນປະເສີດ ສີກຸນລະບຸດ (ທີ 5 ຈາກຂວາ) ຮັບອາກອນກໍາໄລຂອງປີ 2022 ຈາກ ປະທານ ລຊມລ ທ່ານ ໂບ ກາວ (ທີ 5 ຈາກຊ້າຍ) ໃນວັນທີ 2 ພຶດສະພາ 2023. ໃຫ້ກຽດເປັນສັກຂີພິຍານໃນພິທີມອບຮັບຄັ້ງນີ້ມີ: ຮອງປະທານ ລຊມລ ທ່ານ ຊູ ຈິນປົງ (ທີ 4 ຈາກຊ້າຍ), ຜູ້ອໍານວຍການໃຫຍ່ ລຊມລ ທ່ານ ສະໝານ ອະເນກາ (ທີ 3 ຈາກຊ້າຍ), ແລະ ຄະນະຈາກທັງສອງຝ່າຍ.

ທ່ານ ບຸນປະເສີດ ສີກຸນລະບຸດ, ຫົວໜ້າກົມສ່ວຍສາອາກອນ ໄດ້ໃຫ້ກຽດ ຮັບອາກອນກໍາໄລດັ່ງກ່າວ ມອບໂດຍ ທ່ານ ໂບ ກາວ, ປະທານ ບໍລິສັດ LXML ໂດຍການເປັນສັກຂີພິຍານຂອງ ທ່ານ ວ່າງເຢຍ ໄຊນາລໍ, ພະແນກຄຸ້ມຄອງລາຍຮັບອາກອນ ແລະ ທ່ານນາງ ຈັນທະນາ ຫຼວງມໄມຕຣີ, ພະແນກຈັດຕັ້ງ, ບໍລິຫານ ແລະ ການເງິນ ຈາກກົມສ່ວຍສາອາກອນ; ຮອງປະທານ LXML ທ່ານ ໂຈ ຈິນປົງ; ຜູ້ອໍານວຍການໃຫຍ່ LXML ທ່ານ ສະໝານ ອະເນກາ; ແລະ ຄະນະຜູ້ບໍລິຫານອາວຸໂສຂອງ LXML.




**ທ່ານ ບຸນປະເສີດ ສີກຸນລະບຸດ, ຫົວໜ້າກົມສ່ວຍສາອາກອນ** ໄດ້ກ່າວວ່າ: "LXML ເປັນທີ່ຮັບຮູ້ໃນຖານະຜູ້ມອບອາກອນລາຍໃຫຍ່ອັນດັບຕົ້ນໆຢູ່ໃນ ສປປ ລາວ ເຊິ່ງໄດ້ມີພິທີມອບໃບຍ້ອງຍໍ ໃຫ້ແກ່ ບໍລິສັດ-ຜູ້ປະກອບການທີ່ມອບພັນທະອາກອນທີ່ມີຜົນງານດີເດັ່ນ ລວມໄປທັງ LXML ຈັດຂຶ້ນໃນວັນທີ 5 ເມສາ 2023 ຜ່ານມາ."

**ທ່ານ ໂບ ກາວ, ປະທານ LXML** ໄດ້ກ່າວວ່າ: "ພວກເຮົາມີຄວາມພາກພູມໃຈຍິ່ງ ທີ່ໄດ້ປະກອບສ່ວນທາງດ້ານການເງິນຢ່າງເຂັ້ມແຂງ ໃຫ້ແກ່ລັດຖະບານ ໃນເວລາທີ່ຫຼາຍພາກສ່ວນໃນທົ່ວໂລກພົບພໍ້ກັບຄວາມຫຍຸ້ງຍາກທາງດ້ານການເງິນ."

ໃນພິທີຄັ້ງນີ້, ທ່ານ ກາວ ປົວ ໄດ້ລາຍງານຕື່ມກ່ຽວກັບຜົນການດໍາເນີນງານຂອງໂຄງການຄໍາ-ທອງ ເຊໂປນ ໃນປີ 2022 ເຊິ່ງ ສາມາດຜະລິດຄໍາໄດ້ ກວ່າ 6,7 ໂຕນ ແລະ ທອງ 6.600 ໂຕນ. ໃນປີດຽວກັນນີ້, LXML ໄດ້ເປີດບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທໍາອິດ ຂອງ ສປປ ລາວ ຢູ່ບໍ່ຄໍາ-ທອງ ເຊໂປນ ອັນໄດ້ເປັນແບບຢ່າງ ແລະ ບັນທັດຖານໃຫ້ແກ່ໂຄງການບໍ່ແຮ່ອື່ນໆ ກໍຄື ການຂະຫຍາຍອາຍຸການບໍ່ແຮ່ຄໍາ-ທອງ ເຊໂປນ ໄປເຖິງປີ 2033 ເປັນຢ່າງຕໍ່າ.



ລູກລະເບີດ 750lbs - MK82 ທີ່ພົບຢູ່ບໍ່ແຮ່ ນາລູ, ທີ່ຝັງເລິກຈາກໜ້າດິນປະມານ 3.9m. ເຊິ່ງໄດ້ຖືກເຄື່ອນຍ້າຍໄວ້ບ່ອນທີ່ປອດໄພ ເພື່ອທໍາລາຍໃນຂັ້ນຕໍ່ໄປ.



ທີມງານຄວາມປອດໄພ ແລະ ຮັບມືເຫດສຸກເສີນ ສໍາເລັດການຝຶກອົບຮົມ ກູ້ໄພບໍ່ໃຕ້ດິນປະຈໍາປີ 2022

# ບໍລິສັດ ຊີເຟີງຂຸດຄົ້ນຄໍາ ຮ່ວມມືກັບ ລັດວິສາຫະກິດພັດທະນາແຮ່ທາດລາວ



ທ່ານ ບຸນຍົງ ສິດາວົງ, ຜູ້ອຳນວຍການ ພຣລ (ທີ 2 ຈາກຊ້າຍ) ແລະ ທ່ານ ພໍ ແຮຣິສ໌, ປະທານກິຕິມະສັກບໍລິສັດຊີເຟີງ ແລະ ຜູ້ຈັດການໃຫຍ່ບໍລິສັດ ລຊມລ (ທີ 3 ຈາກຊາຍ) ໄດ້ລົງນາມສັນຍາ ພາຍໃຕ້ການເປັນສັກຂີພະຍານຂອງ ທ່ານ ອຳພົນ ສຸດທິພົນ, ຮອງອຳນວຍການ ພຣລ (ທີ 1 ຈາກຊາຍ) ແລະ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ ບໍລິສັດ ລຊມລ (ທີ 1 ຈາກຂວາ) ຢູ່ ໂຮງແຮມ ຄຣາວ ພລາຊາ, ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 11 ກໍລະກົດ 2022.

**ໃນວັນທີ 11 ກໍລະກົດ 2022,** ບໍລິສັດ ຊີເຟີງ ຈີຫຼົງ ຂຸດຄົ້ນຄຳ ໄດ້ລົງນາມສັນຍາການຮ່ວມມືຄັ້ງປະຫວັດສາດກັບ ລັດວິສາຫະກິດ ພັດທະນາແຮ່ທາດລາວ (ພຣລ). ສັນຍາດັ່ງກ່າວຈະຊ່ວຍໃຫ້ບັນດາຝ່າຍສຸມໃສ່ການສຳຫຼວດ ແລະ ພັດທະນາແຫຼ່ງແຮ່ຕ່າງໆ ເພື່ອພັດທະນາໂຄງການຂະໜາດໃຫຍ່ໃນອະນາຄົດ ຢູ່ ສປປ ລາວ.

**ທ່ານ ພໍ ແຮຣິສ, ປະທານກິຕິມະສັກຂອງ ບໍລິສັດຊີເຟີງ ຂຸດຄົ້ນຄຳ ແລະ ຜູ້ຈັດການໃຫຍ່ຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ** (ລຊມລ) ໄດ້ກ່າວວ່າ: "ສັນຍາສະບັບນີ້ ຍິ່ງໃຫ້ເຫັນຄວາມໝາຍໝັ້ນທີ່ມີມາຍາວນານຂອງ ບໍລິສັດ ຊີເຟີງ ໃນການເຕີບໂຕ ແລະ ການພັດທະນາຂະແໜງການບໍ່ແຮ່ ຢູ່ໃນ ສປປ ລາວ."

"ພວກເຮົາພວມເຮັດວຽກຮ່ວມມືກັບລັດຖະບານລາວ ເພື່ອພັດທະນາອີກຫຼາຍໆໂຄງການທີ່ຈະປະສົບຜົນສຳເລັດຄື ໂຄງການຄຳ-ທອງ ເຊໂປນ. ບໍລິສັດ ຊີເຟີງ ແລະ ພຣລ ຈະດຳເນີນການສຳຫຼວດເພື່ອລິເລີ່ມໂຄງການບໍ່ແຮ່ລະດັບໂລກ ເພື່ອສ້າງຜົນປະໂຫຍດຮ່ວມກັນສຳລັບຜູ້ມີສ່ວນຮ່ວມ ໂດຍສະເພາະປະຊາຊົນລາວ."

"ໂດຍຮ່ວມກັບ ພຣລ ແລະ ລັດຖະບານລາວ, ພວກເຮົາພວມສ້າງພື້ນຖານອັນເຂັ້ມແຂງເພື່ອຂະຫຍາຍການລົງທຶນຢ່າງມະຫາສານ ໃນ ສປປ ລາວ ຂອງ ບໍລິສັດ ຊີເຟີງ. ພວກເຮົາຈະຮັກສາມາດຕະຖານສາກົນທີ່ເປັນທີ່ຮູ້ຈັກຢ່າງກວ້າງຂວາງ ໂດຍສະເພາະໃນດ້ານຄວາມປອດໄພ, ສິ່ງແວດລ້ອມ, ການພັດທະນາຊຸມຊົນ ແລະ ການພັດທະນາກຳລັງພະນັກງານຄົນລາວ."

**ທ່ານ ບຸນຍົງ ສິດາວົງ, ຜູ້ອຳນວຍການໃຫຍ່ ລັດວິສາຫະກິດພັດທະນາແຮ່ທາດລາວ** ໄດ້ກ່າວວ່າ: "ສັນຍາສະບັບນີ້ ຊຸກຍູ້ໃຫ້ມີການສຳຫຼວດເຂດທີ່ມີທ່າແຮງດ້ານແຮ່ທາດ ກ່ອນທີ່ຈະສ້າງສັນນຍາສຳປະທານ."

"ພຣລ ມີຄວາມເຊື່ອໝັ້ນດ້ານຄວາມພ້ອມຄວາມຊຳນິຊຳນານ ຂອງ ບໍລິສັດ ຊີເຟີງ ໂກນ ທີ່ຈະນຳສູ່ຜົນສຳເລັດ ເຊິ່ງເຫັນໄດ້ຈາກ ຜົນງານດ້ານການດຳເນີນໂຄງການຂຸດຄົ້ນ ແລະ ປຸງແຕ່ງຄຳ-ທອງ ເຊໂປນ. ສະນັ້ນ, ການຊອກຫາເຂດທີ່ມີທ່າແຮງດ້ານແຮ່ທາດເປັນສິ່ງສຳຄັນຕັດສິນ ແລະ ການສະໜັບສະໜູນ ຈາກລັດຖະບານ, ບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ຊຸມຊົນທ້ອງຖິ່ນ ແມ່ນຄວາມຈຳເປັນໃນການພັດທະນາຂະແໜງບໍ່ແຮ່ໃນ ສປປ ລາວ."






# ບໍລິສັດ LXML ບໍ່ຄຳ-ທອງ ມອບສັດລ້ຽງໃຫ້ແກ່ປະຊາຊົນ ອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ



ທ່ານ ວາລິຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ ແລະ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ລຊມລ, ພ້ອມດ້ວຍ ອຳນາດການປົກຄອງ ເມືອງ, ບ້ານ, ພະນັກງານບໍລິສັດ ລຊມລ ແລະ ປະຊາຊົນຮວມມອບສັດລ້ຽງໃຫ້ແກ່ຄອບຄົວຜູ້ດ້ອຍໂອກາດ.

ໃນຕອນເຊົ້າ ວັນທີ 6 ມິຖຸນາ 2023, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (ບໍ່ຄຳ-ທອງ ເຊໂປນ) ຮ່ວມກັບອຳນາດການປົກຄອງເມືອງ ວິລະບູລີ ຈັດພິທີ ມອບສັດລ້ຽງໃຫ້ແກ່ຄອບຄົວຜູ້ດ້ອຍໂອກາດ ໃນເຂດບ້ານອ້ອມຂ້າງ ໂຄງການຄຳ-ທອງ ເຊໂປນ ຈຳນວນ 18 ຄອບຄົວ, ເຊິ່ງສັດລ້ຽງລວມມີ ງົວ 45 ໂຕ ແລະ ແບ້ 40 ໂຕ, ລວມມູນຄ່າທັງໝົດ 471,000,000ກີບ.

**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML** ໄດ້ກ່າວວ່າ: "ອີງຕາມທິດທາງ ຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ 8, ສປປ ລາວ ໄດ້ກຳນົດບູລິມະສິດໃຫ້ແກ່ການເຕີບໂຕທາງເສດຖະກິດແບບສີຂຽວ ໃສ່ໃນຍຸດທະສາດການພັດທະນາກະສິກຳ ແລະ ປ່າໄມ້ ໃນໄລຍະຍາວ ແລະ ສຸມໃສ່ການປັບປຸງຄຸນນະພາບຂອງການຜະລິດຕະພັນກະສິກຳ, ການຮັບປະກັນທາງດ້ານສະບຽງອາຫານ ແລະ ຜະລິດຕະພັນທີ່ປອດໄພ. ການສະໜັບສະໜູນຂອງ ບໍລິສັດ LXML ນີ້ ແມ່ນບາດກ້າວສຳຄັນ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ດັ່ງກ່າວ ເຊິ່ງຈະເປັນການສະໜອງສັດລ້ຽງທີ່ແນໃສ່ພັດທະນາຊີວິດການເປັນຂອງຊຸມຊົນໃຫ້ສາມາດກຸ້ມຕົນເອງ ແລະ ກ້າວສູ່ການຜະລິດເປັນສິນຄ້າ."

ການມອບສັດລ້ຽງໃນຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນຈາກ ກອງທຶນຊ່ວຍເຫຼືອຜູ້ດ້ອຍໂອກາດ ທີ່ສະໜັບສະໜູນໂດຍ ບໍລິສັດ LXML ເຊິ່ງກອງທຶນດັ່ງກ່າວ ແມ່ນໄດ້ສົ່ງເສີມໃຫ້ຊຸມຊົນອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ ເຮັດການຜະລິດກະສິກຳ ເປັນຕົ້ນແມ່ນ ການລ້ຽງ ໄກ່ພັນໄຂ່, ກົບ, ແບ້, ແລະ ງົວ ເຊິ່ງໄດ້ສ້າງຜົນປະໂຫຍດມະຫາສານໃຫ້ແກ່ຊຸມຊົນທ້ອງຖິ່ນ ອ້ອມຂ້າງບໍ່ຄຳ-ທອງເຊໂປນ.

ນັບຕັ້ງແຕ່ ປີ 2019 ຫາ 2023 ກອງທຶນດັ່ງກ່າວ ໄດ້ລົງທຶນໃຫ້ການຊ່ວຍເຫຼືອຄອບຄົວຜູ້ດ້ອຍໂອກາດທັງໝົດ ລວມມູນຄ່າຫຼາຍກວ່າ 1,200,000,000ກີບ, ເຊິ່ງມີ 54 ຄອບຄົວ ໄດ້ຮັບຜົນປະໂຫຍດຈາກກອງທຶນນີ້.

ກອງທຶນຊ່ວຍເຫຼືອຜູ້ດ້ອຍໂອກາດ (ຫຼື FADG) ແມ່ນທຶນຊ່ວຍເຫຼືອລ້າ ລະຫວ່າງ US$8.000 ເຖິງ US$16.000 ອີງຕາມຈຳນວນຄົວເຮືອນ. ໂດຍລວມ ແມ່ນໄດ້ຈັດຕັ້ງປະຕິບັດຫຼາຍກວ່າ 260 ໂຄງການໃນ 47 ຊຸມຊົນ ໂດຍການລົງທຶນທັງໝົດ US$3,4 ລ້ານ. ປະຊາຊົນໃນບ້ານຈະເປັນຜູ້ເລືອກໂຄງການເອງ ພ້ອມທັງປະກອບສ່ວນບໍ່ວ່າຈະເປັນເວລາ, ວັດຖຸ ແລະ ແຮງງານ ເພື່ອຊຸກຍູ້ຄວາມເປັນເຈົ້າການຂອງຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ.








ໃຫ້ກຽດລົງນາມໃນບົດບັນທຶກຄວາມເຂົ້າໃຈຄັ້ງນີ້ມີ: ທ່ານ ພົນຈັດຕະວາ ວຽງໄຊ ໄຊສະໝອນ, ຫົວໜ້າກົມຊ່າງແສງ, ກະຊວງ ປ້ອງກັນປະເທດ (ຊ້າຍ) ແລະ ທ່ານ ໄມໂຄ ສະຕ໊ອດ, ຜູ້ຈັດການພະແນກເຕັກນິກບໍ່ແຮ່ຂອງ ລຊມລ (ຂວາ) ໂດຍການເປັນສັກຂີພິຍານຂອງ ທ່ານ ພັ.ທ ໂອທອງ ຄຳບານໄຊ, ຮອງຫົວໜ້າພະແນກອົບຮົມ-ສູ້ຮົບ ແລະ ທ່ານ ປາລີວັດ ອິນທະວົງ, ຫົວໜ້າສາຍງານດ້ານໂຄງການ ແລະ ການບໍລິການຂອງ ລຊມລ.

# LXML ເຊໂປນ ສະໜັບສະໜູນວຽກງານ UXO ທີ່ຕົກຄ້າງ ຢູ່ໃນ ສປປ ລາວ

ໃນວັນທີ 26 ມັງກອນ 2023, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (ລຊມລ) ບໍ່ຄຳ-ທອງ ເຊໂປນ ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈ (MoU) ກັບກະຊວງປ້ອງກັນປະເທດເພື່ອສະໜັບສະໜູນການເກັບກູ້ລະເບີດທີ່ບໍ່ທັນແຕກຕົກຄ້າງ (UXO) ຢູ່ໃນ ສປປ ລາວ.

ບໍ່ຄຳ-ທອງ ເຊໂປນ ຕັ້ງຢູ່ບ່ອນທີ່ຖືກຖິ້ມລະເບີດລົງຫຼາຍທີ່ສຸດໃນແຂວງສະຫວັນນະເຂດ ແລະ ວຽກງານເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ເປັນວຽກງານທີ່ສຳຄັນໃນວົງຈອນການຂຸດຄົ້ນ-ປຸງແຕ່ງ-ຜະລິດບໍ່ແຮ່ ກໍຄື ວຽກງານພັດທະນາຊຸມຊົນ. ນັບຕັ້ງແຕ່ປີ 1996, LXML ໄດ້ລົງທຶນຫຼາຍກວ່າ US$56 ລ້ານໃນວຽກງານເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ກວມໃນເນື້ອທີ່ 6,400 ເຮັກຕາ ແລະ ໄດ້ທຳລາຍລະເບີດບໍ່ທັນແຕກໄດ້ 60,000 ລູກ ອັນໄດ້ສະໜັບສະໜູນຊຸມຊົນທ້ອງຖິ່ນໃນການພັດທະນາໂຄງການກະສິກຳ ແລະ ໂຄງການພັດທະນາອື່ນໆຢູ່ອ້ອມຂ້າງບໍ່ຄຳ-ທອງ ເຊໂປນ.

LXML, ກະຊວງ ປ້ອງກັນປະເທດ ແລະ ຄະນະກຳມະການຄຸ້ມຄອງເກັບກູ້ລະເບີດແຫ່ງຊາດ ແລະ ອົງການເກັບກູ້ລະເບີດແຫ່ງຊາດ ໄດ້ເຮັດວຽກງານຮ່ວມກັນເພື່ອປັບປຸງມາດຕະຖານການເກັບກູ້ລະເບີດທີ່ບໍ່ທັນແຕກ. ໃນປີ 2015, LXML ແລະ ຄະນະກຳມະການຄຸ້ມຄອງເກັບກູ້ລະເບີດແຫ່ງຊາດ ໄດ້ຮ່ວມກັນສ້າງຫຼັກສູດຝຶກອົບຮົມກ່ຽວກັບ ການທຳລາຍລະເບີດທີ່ບໍ່ທັນແຕກເພື່ອສ້າງຄວາມອາດສາມາດໃຫ້ແກ່ນັກວິຊາການລາວ ໃຫ້ໄດ້ຮັບຄຸນວຸດທີ່ເປັນທີ່ຍອມຮັບໃນລະດັບສາກົນ.

ທ່ານ ພົນຈັດຕະວາ ວຽງໄຊ ໄຊສະໝອນ, ຫົວໜ້າກົມຊ່າງແສງ, ກະຊວງປ້ອງກັນປະເທດ ໄດ້ກ່າວວ່າ: "ການຮ່ວມມືນີ້ສະໜັບສະໜູນໃຫ້ວຽກງານເກັບກູ້ລະເບີດບໍ່ທັນແຕກດຳເນີນໄປຢ່າງປອດໄພ ຖືກຕ້ອງຕາມມາດຕະຖານແຫ່ງຊາດຂອງ ຄະນະກຳມະການຄຸ້ມຄອງເກັບກູ້ລະເບີດແຫ່ງຊາດ. ພວກເຮົາຈະສານຕໍ່ການຮ່ວມມືກັບ LXML ທີ່ມີມາເປັນທົດສະຫວັດ ເພື່ອບັນ ລຸພາກປະຕິບັດທີ່ດີທີ່ສຸດໃນການເກັບກູ້ ແລະ ທຳລາຍລະເບີດທີ່ບໍ່ທັນແຕກ."

LXML ແລະ ຄະນະກຳມະການຄຸ້ມຄອງເກັບກູ້ລະເບີດແຫ່ງຊາດ ສືບຕໍ່ລົງທຶນໃສ່ເຕັກໂນໂລຊີທັນສະໄໝເພື່ອປັບປຸງຄວາມອາດສາມາດໃນການກວດຫາ ແລະ ຈັບສັນຍານລູກລະເບີດບໍ່ທັນແຕກໄດ້ຢ່າງມີປະສິດທິຜົນ. ຕົວຢ່າງ: ເຄື່ອງກວດລະເບີດ "Gap EOD Ultra-TEM II" (Fixed Loop Electromagnetic Method - FLEM) ສາມາດຈັບສັນຍານລູກລະເບີດບໍ່ທັນແຕກໃນລະດັບເລິກເຖິງ 3.5 ແມັດ. ໃນປີ 2020, ລຊມລ ໄດ້ສືບຕໍ່ປັບປຸງດັດແກ້ປະສິດທິພາບຂອງເຄື່ອງກວດມາເປັນ "Moving Loop Electromagnetic (MLEM)" ທີ່ອະເນກປະສົງກວ່າເກົ່າ, ສາມາດເຄື່ອນຍ້າຍດ້ວຍລົດເບົາ, ເຄື່ອນທີ່ໄດ້ສະດວກ ແລະ ສາມາດນຳໃຊ້ໄດ້ໃນພື້ນທີ່ສູງຊັນ ແລະ ສະພາບແວດລ້ອມທີ່ມີຄວາມຫຍຸ້ງຍາກ ໂດຍສະເພາະແມ່ນ ແທດເໝາະກັບສະພາບແວດລ້ອມການຂຸດຄົ້ນບໍ່ແຮ່ຢູ່ ບໍ່ຄຳ-ທອງ ເຊໂປນ. ນະວັດຕະກຳທັນສະໄໝເຫຼົ່ານີ້ ໄດ້ຊ່ວຍປັບປຸງຄວາມຊັດເຈນ, ຄວາມໄວ ແລະ ຄຸນນະພາບຂອງວຽກງານກວດກູ້ລະເບີດບໍ່ທັນແຕກໄດ້ຢ່າງມີປະສິດທິຜົນ.

ໃຫ້ກຽດລົງນາມໃນບົດບັນທຶກຄວາມເຂົ້າໃຈຄັ້ງນີ້ມີ: ທ່ານ ພົນຈັດຕະວາ ວຽງໄຊ ໄຊສະໝອນ, ຫົວໜ້າກົມຊ່າງແສງ, ກະຊວງປ້ອງກັນປະເທດ ແລະ ທ່ານ ໄມໂຄ ສະຕ໊ອດ, ຜູ້ຈັດການພະແນກເຕັກນິກບໍ່ແຮ່ຂອງ LXML ໂດຍການເປັນສັກຂີພິຍານຂອງ ທ່ານ ພັ.ທ ໂອທອງ ຄຳບານໄຊ, ຮອງຫົວໜ້າພະແນກອົບຮົມ-ສູ້ຮົບ ແລະ ທ່ານ ປາລີວັດ ອິນທະວົງ, ຫົວໜ້າສາຍງານດ້ານໂຄງການ ແລະ ການບໍລິການຂອງ ລຊມລ.

ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ຂອງ LXML ໄດ້ກ່າວວ່າ: "ພວກເຮົາສືບຕໍ່ຫລຸດຜ່ອນອຸປະສັກອັນຕະລາຍທີ່ມີຜົນກະທົບທ່ວງດຶງ ການພັດທະນາຂອງ ສປປ ລາວ. ພວກເຮົາເຮັດວຽກຢ່າງໃກ້ຊິດກັບ ຊຸມຊົນທ້ອງຖິ່ນ ແລະ ລັດຖະບານລາວເພື່ອ ກວດກູ້ ແລະ ທຳລາຍ ລະເບີດທີ່ບໍ່ທັນແຕກຕົກຄ້າງເພື່ອໃຫ້ທຸກໆຄົນປອດໄພກວ່າເກົ່າ. ລຊມລ ມີຄວາມຮູ້ບຸນຄຸນຢ່າງຍິ່ງ ສຳລັບການຮ່ວມມືຢ່າງຕໍ່ເນື່ອງກັບກະຊວງປ້ອງກັນປະເທດ, ຄະນະກຳມະການຄຸ້ມຄອງເກັບກູ້ລະເບີດແຫ່ງຊາດ ແລະ ອົງການເກັບກູ້ລະເບີດແຫ່ງຊາດ ໃນກິດຈະກຳທີ່ອັນຕະລາຍນີ້."

# LXML ບໍ່ຄຳ-ທອງ ເຊໂປນ ຈັດກອງປະຊຸມປຶກສາຫາລືປະຈຳປີກັບ ລັດຖະບານລາວ ຄັ້ງທີ 29



LXML ເຊໂປນ ໄດ້ນຳສະເໜີຕໍ່ ບັນດາຜູ້ເຂົ້າຮ່ວມກອງປະຊຸມຈາກພາກສ່ວນລັດຖະບານ ແລະ ຊຸມຊົນ ກ່ຽວກັບ ຜົນສຳເລັດການດຳເນີນງານ ຂອງບໍ່ຄຳ-ທອງ ເຊໂປນ, ແຜນທຸລະກິດ ແລະ ຄວາມຄືບໜ້າຂອງວຽກງານພັດທະນາຊຸມຊົນ.

ໃຫ້ກຽດເປັນປະທານຄັ້ງນີ້ມີ ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ທ່ານ ທອງພັດ ອິນທະວົງ, ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຂອງສະພາແຫ່ງຊາດ ທ່ານ ຄຳມ່ວນ ສິມສິຫາປັນຍາ, ຮອງເຈົ້າແຂວງສະຫວັນນະເຂດ ດຣ ແສນສັກ ສຸລິສັກ ແລະ ຫົວໜ້າບໍລິຫານສູງສຸດດ້ານການດຳເນີນງານ ຂອງ ຊີເຟີງໂກນ ທ່ານ ພໍ ແຮຣິສ໌.



ເຂົ້າຮ່ວມກອງປະຊຸມຄັ້ງນີ້ມີ ພາກລັດຖະບານທີ່ກ່ຽວຂ້ອງ ລວມທັງກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະ ຊວງແຮງງານ ແລະ ສະຫວັດດີ ການສັງຄົມ, ຜູ້ຕາງໜ້າຊຸມຊົນ ແລະ ອົງການຈັດຕັ້ງຂັ້ນຮາກຖານ.

ຜູ້ເຂົ້າຮ່ວມໄດ້ປຶກສາຫາລືກ່ຽວກັບ ຜົນງານດ້ານຄວາມປອດໄພ ແລະ ສິ່ງແວດລ້ອມ, ຜົນປະໂຫຍດທາງດ້ານເສດຖະກິດຕໍ່ ສປປ ລາວ, ໂຄງລ່າງພື້ນຖານ, ປະເດັນແຮງງານ, ແຜນການປິດບໍ່ແຮ່, ແລະ ແຜນງານພັດທະນາຊຸມຊົນ.

ທີ່ພົ້ນເດັ່ນ ແມ່ນ ທ່ານປະທານກອງປະຊຸມ ແລະ ການນຳພາກລັດຈາກ ແຂວງສະຫວັນນະເຂດ ກໍໄດ້ສະແດງການສະໜັບສະໜູນຕໍ່ LXML ໃນການຍືດອາຍຸການລົງທຶນໃນກິດຈະການບໍ່ແຮ່ ໃນ ສປປ ລາວ ຕາມການສະເໜີຂອງ ບໍລິສັດ. ນອກຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ສະແດງຄວາມຮັບຮູ້ເປັນຢ່າງດີ ເຖິງ ຊື່ສຽງ-ຄວາມເຊື່ອຖື ຂອງບໍລິສັດ.

LXML ມຸ່ງໝັ້ນທີ່ຈະສືບຕໍ່ຮ່ວມມືກັບ ລັດຖະບານລາວໃນຖານະຄູ່ຮ່ວມພັດທະນາ ຢູ່ໃນ ສປປ ລາວ.





ແທ່ງຄຳ ຈາກບໍ່ຄຳ- ທອງ ເຊໂປນ

# LXML ບໍ່ຄຳ-ທອງ ເຊໂປນ ຜະລິດຄຳໄດ້ 6,7 ໂຕນ ໃນປີ 2022

ໃນປີ 2022, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ບໍ່ຄຳ-ທອງ ເຊໂປນ ສາມາດຜະລິດຄຳໄດ້ຫຼາຍກວ່າ 6,7 ໂຕນ ແລະ ທອງ 6.600 ໂຕນ ອັນໄດ້ສະໜັບສະໜູນລາຍຮັບຈາກການສົ່ງອອກ ແລະ ການພັດທະນາເສດຖະກິດ-ສັງຄົມ ຢູ່ໃນ ສປປ ລາວ.

ຄາດໝາຍການຜະລິດທີ່ຕັ້ງໄວ້ສຳລັບປີ 2023 ແມ່ນ ຄຳຫຼາຍກວ່າ 6 ໂຕນ ແລະ ທອງ 7.000 ໂຕນ.

ຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, ບໍລິສັດ LXML ໄດ້ປະກອບສ່ວນຫຼາຍກວ່າ US$1.6 ຕື້ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍພາສີອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນີ້, ກໍໄດ້ປະກອບສ່ວນຫຼາຍຮ້ອຍລ້ານໂດລາໃສ່ການສ້າງວຽກເຮັດງານທຳ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ທຸລະກິດທ້ອງຖິ່ນ.

ໃນປີ 2022, ພວກເຮົາໄດ້ເປີດບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດ ຂອງ ສປປ ລາວ ຢູ່ ບໍ່ຄຳ-ທອງ ເຊໂປນ ອັນໄດ້ເປັນແບບຢ່າງ ແລະ ບັນທັດຖານໃຫ້ແກ່ໂຄງການບໍ່ແຮ່ອື່ນໆ ກໍຄືການຂະຫຍາຍອາຍຸການບໍ່ແຮ່ຄຳ-ທອງ ເຊໂປນ ໄປເຖິງປີ 2033 ເປັນຢ່າງຕ່ຳ.

ນັບຕັ້ງແຕ່ປີ 2016, LXML ສາມາດຮັກສາ ໃບກຽດຕິສັກ-ຜົນງານປະເພດສູງສຸດ ຂັ້ນ A+ ຈາກກະຊວງພະລັງງານ ແລະ ບໍ່ແຮ່ ສຳລັບການຮັກ ສາມາດຕະຖານດ້ານສິ່ງແວດ ລ້ອມ ແລະ ການພັດທະນາຊຸມຊົນ.

LXML ໄດ້ບັນລຸໝາກຜົນທີ່ດີ ໃນວຽກງານພັດທະນາຊຸມຊົນ ໂດຍການຮ່ວມມືກັບລັດຖະບານລາວ ແລະ ຊຸມຊົນທ້ອງຖິ່ນ ຢ່າງສະເໝີມາ. ຜົນງານເຫຼົ່ານີ້ ໄດ້ເປັນສິ່ງຂັບເຄື່ອນໃຫ້ເມືອງວິລະບູລີໄດ້ຫລຸດພົ້ນຈາກສະຖານະເມືອງທີ່ທຸກຍາກທີ່ສຸດໄດ້ ໃນປີ 2015

LXML ໄດ້ຊື້ສິນຄ້າທ້ອງຖິ່ນຢ່າງຕ່ຳ US$3 ລ້ານ (75% ຂອງໝາກໄມ້, ຜັກ ແລະ ຜົນຜະລິດທ້ອງຖິ່ນ) ຜ່ານຫົວໜ່ວຍທຸລະກິດທ້ອງຖິ່ນ - ເຊິ່ງໄດ້ສ້າງລາຍໄດ້ໃຫ້ແກ່ທຸລະກິດທ້ອງຖິ່ນລວມທັງໝົດຫຼາຍກວ່າ US$50 ລ້ານ ກໍຄືສ້າງລາຍໄດ້ໃຫ້ແກ່ປະຊາຊົນທ້ອງຖິ່ນ.

ແຜນງານການພັດທະນາຊຸມຊົນຂອງພວກເຮົາ ສຸມໃສ່ ສາທາລະນະສຸກຂອງຊຸມຊົນ, ການສຶກສາຂອງອະນຸຊົນ-ຄົນຮຸ່ນຫຼັງ, ການປະຕິບັດກະສິກຳແບບຍືນຍົງ ແລະ ການປັບປຸງຊີວິດການເປັນຢູ່ໃຫ້ແກ່ຊຸມຊົນຜູ້ດ້ອຍໂອກາດ. ພວກເຮົາຈະສືບຕໍ່ຮ່ວມມື ແລະ ປຶກສາຫາລືກັບຊຸມຊົນທ້ອງຖິ່ນ ແລະ ຄູ່ຮ່ວມງານອື່ນໆ ກ່ຽວກັບ ບູລິມະສິດຂອງວຽກງານການພັດທະນາຊຸມຊົນ.

ໃນເດືອນ ເມສາ 2022, LXML ໄດ້ບໍລິຈາກ US$5 ລ້ານ ໃຫ້ແກ່ ແຂວງສະຫວັນນະເຂດ ເພື່ອຍົກລະ ດັບສະພາບເສັ້ນທາງຫຼວງ 28A ຍາວ 41,56ກມ ຈາກນາບໍ່ ເຖິງ ເມືອງວິລະບູລີ ເຊິ່ງຈະສະໜອງການເຂົ້າເຖິງຕະຫຼາດທີ່ດີກວ່າເກົ່າສຳລັບປະຊາຊົນກວ່າ 40.000 ຄົນ. ເສັ້ນທາງ 28A ເປັນເສັ້ນທາງສຳຄັນທີ່ເຊື່ອມຕໍ່ ແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ທີ່ເຊື່ອມຈອດ ສປປ ລາວ ກັບຫວຽດນາມ ແລະ ໄທ.



ໂຮງງານຜະລິດຄຳແບບຟູລອຍ. ຂະບວນການຜະລິດຄຳແບບຟູລອຍ ແມ່ນວິທີການຜະລິດແຮ່ຄຳເຂັ້ມຂຸ້ນທີ່ໃຊ້ຕົ້ນທຶນຕ່ຳ.

LXML ໄດ້ລົງທຶນປະມານ US$34 ລ້ານໃສ່ໂຄງລ່າງພື້ນຖານ ເພື່ອຂະຫຍາຍຕາຂ່າຍໄຟຟ້າຈາກ ເມືອງທ່າແຂກ ເຖິງ ເມືອງມະຫາໄຊ ໂດຍການຮ່ວມມືກັບ ລັດວິສາຫະກິດໄຟຟ້າລາວ ອັນໄດ້ຂະຫຍາຍໂອກາດດ້ານເສດຖະກິດໃຫ້ແກ່ຊຸມຊົນຢູ່ເຂດຊົນນະບົດ.

# ທີມບໍລິການອາຫານ-ເຄື່ອງດື່ມ ພາກສະໜາມເຊໂປນ ຍຶດຖື ຄວາມສະອາດ ແລະ ຄວາມປອດໄພເປັນຫຼັກ



ໃນແຕ່ລະເດືອນ, ທີມງານເຄເຕີຣິງ (ບໍລິການອາຫານ-ເຄື່ອງດື່ມ) ຂອງພວກເຮົາເຮັດວຽກທັງເວັນທັງຄືນເພື່ອກະກຽມອາຫານ 110.000 ຄາບສຳລັບພະນັກງານຂອງພວກເຮົາ! ສະມາຊິກໃນທີມ 115 ຄົນເຮັດວຽກໃນສະພາບແວດລ້ອມທີ່ແລ່ນກັບເວລາ, 24 ຊົ່ວໂມງຕໍ່ວັນເພື່ອກະກຽມອາຫານທີ່ສະອາດ, ດີຕໍ່ສຸຂະພາບ ແລະ ແຊບຊ້ອຍໃຫ້ແກ່ພະ ນັກງານ ແລະ ຜູ້ຮັບເໝົາກວ່າ 2.000 ຄົນ.

ທີມງານເຄເຕີຣິງ ຂອງພວກເຮົາ ຍຶດຖືຄວາມສະອາດ-ສຸຂາອະນາໄມ ແລະ ຄວາມປອດໄພເປັນບູລິມະສິດຕົ້ນຕໍ. ແຕ່ວ່າ, ການຮັກສາຄວາມປອດໄພກໍບໍ່ໄດ້ວ່າຈະງ່າຍຢູ່ສະເໝີເມື່ອຕ້ອງເຮັດວຽກທ່າມກາງສະພາບແວດລ້ອມທີ່ສິນລະວົນ. ສະນັ້ນ, ການຕັກເຕືອນ-ແນະນຳ ແລະ ການຝຶກອົບຮົມຢ່າງເປັນປະຈຳຈຶ່ງມີຄວາມສຳຄັນ.

ໃນໄລຍະ 6 ເດືອນທ້າຍປີ 2022, ທີມງານເຄເຕຣິງ ໄດ້ຮັບການຝຶກອົບຮົມ-ບຳລຸງຈຳນວນໜຶ່ງ ນອກຈາກ ການຝຶກອົບຮົມປະຈຳເດືອນທີ່ຈັດຂຶ້ນເປັນປົກກະຕິ ເປັນຕົ້ນໃນຫົວຂໍ້ກ່ຽວກັບການກະກຽມອາຫານຢ່າງປອດໄພ, ການເຮັດວຽກຢ່າງປອດໄພ, ແລະ ຄວາມປອດໄພຂອງມື. ການຝຶກອົບຮົມເຫຼົ່ານີ້ໄດ້ເນັ້ນໜັກ ລະບຽບຂັ້ນຕອນດ້ານຄວາມປອດໄພ, ການລະບຸ ແລະ ຫລຸດຜ່ອນຄວາມສ່ຽງ ແລະ ຄວາມອັນຕະລາຍ, ແລະ ຜົນກະທົບທີ່ເກີດຂຶ້ນໃນຕົວຈິງ.

ໃນການຝຶກອົບຮົມແຕ່ລະຄັ້ງ, ທີມງານຈະມີໂອກາດໄດ້ລາງວັນເຊຟຕີຄາດ ເພື່ອຮັບຮູ້-ຍ້ອງຍໍການປະກອບສ່ວນຂອງເຂົາເຈົ້າຕໍ່ການສົນທະນາແລກປ່ຽນບົດຮຽນ.

ໃນການເປີດສັກກະລາດປີ 2023, ທີມງານເຄເຕີຣິງ ໄດ້ດຳເນີນຂະບວນການປູກຈິດສຳນຶກກ່ຽວກັບແນວຄວາມຄິດການຮັກສາຄວາມປອດໄພ "ຢຸດ ແລະ ຄິດ". ຜູ້ທີ່ໄດ້ຮັບເຊຟຕີຄາດ ຂອງເດືອນກຸມພາ ມີ: ນາງ ປ່ຽນໃຈ - ພະນັກງານເສີບ, ນາງ ບົວລອຍ - ພະນັກງານເສີບ, ນາງ ພິມມາ - ພະນັກງານເສີບ, ນາງ ຢີ່ງຈິງເຊີນ - ພະນັກງານເສີບ, ທ່ານ ກຳ - ຜູ້ຊ່ວຍຫ້ອງຄົວ, ນາງ ຈຳປາທອງ - ຜູ້ຊ່ວຍຫ້ອງຄົວ, ທ່ານ ຈູນມີ - ພະນັກງານເສີບ. ຊົມເຊີຍທຸກໆຄົນ!

# LXML ເຊໂປນ ຝຶກອົບຮົມ ຊ່າງສີມືແຮງງານລາວ

ໃນວັນທີ 18 ສິງຫາ 2022, ບໍລິສັດ ລ້ານຊ້າງ ມິເນໂຣນສ ລິມິເຕັດ (LXML) ແລະ ວິທະຍາໄລເຕັກນິກລາວ-ເຢຍລະມັນ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ໂຄງການຝຶກອົບຮົມນັກສຶກສາຊ່າງສີມື ເພື່ອສະໜອງທຶນການສຶກສາດ້ານເຕັກນິກໃຫ້ແກ່ຊຸມຊົນທ້ອງຖິ່ນອ້ອມຂ້າງບໍ່ຄຳ-ທອງເຊໂປນ ໃນເມືອງວິລະບູລີ.




ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ບໍລິສັດ ລຊມລ (ຊ້າຍ) ລົງນາມໃນບົດບັນທຶກຄວາມເຂົ້າໃຈຮ່ວມກັບ ທ່ານ ຄຳສະໄຫວ ຍອມມີລາວົງ ຜູ້ອຳນວຍການວິທະຍາໄລເຕັກນິກລາວ-ເຢຍລະມັນ (ຂວາ).

ນັກສຶກສາຊ່າງສີມື ທີ່ໄດ້ຮັບການຄັດເລືອກສຳລັບໂຄງການ ຈະໄດ້ຮັບການຝຶກອົບຮົມວິຊາຊີບ ໃນຂະແໜງ ການ ເຕັກໂນໂລຊີລົດຍົນ, ໄຟຟ້າເອເລັກໂຕຣນິກ, ຈັກກົນໂຮງງານ, ກົນຈັກໜັກ ແລະ ໂລຫະກຳວິທະຍາ.

ໂຄງການນີ້ ຈະຈັດຕັ້ງປະຕິບັດນັບຕັ້ງແຕ່ ປີ 2022 ແລະ ສິ້ນສຸດໃນປີ 2026. ລະຫວ່າງ ປີ 2015 ແລະ 2018, ນັກ ສຶກ ສາຊ່າງສີມື ຈຳນວນ 18 ຄົນ ໄດ້ສຳເລັດ ຫຼັກສູດ 5 ປີ ໃບປະກາສະນີຍະບັດຂັ້ນ III ຂອງປະເທດອົດສະຕຣາລີ ແລະ ເຕັກນິກວິຊາຊີບຂັ້ນສູງຂອງລາວ, ຜູ້ສຳເລັດຫຼັກສູດໄດ້ຮັບທັກສະທີ່ມີຄຸນຄ່າ ເພື່ອປະກອບສ່ວນໃນການພັດທະນາ ສປປ ລາວ,

ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ບໍລິສັດ LXML ລົງນາມໃນບົດບັນທຶກຄວາມເຂົ້າໃຈຮ່ວມກັບ ທ່ານ ຄຳສະໄຫວ ຍອມມີລາວົງ ຜູ້ອຳນວຍການວິທະຍາໄລເຕັກນິກລາວ-ເຢຍລະມັນ ໂດຍການໃຫ້ກຽດເປັນສັກຂີພິຍານ ໂດຍທ່ານ ໝູພັນ ອຸດສາ ຫົວໜ້າກົມອາຊີວະສຶກສາ, ກະຊວງສຶກສາທິການ ແລະ ກິລາ.

**ທ່ານ ສະໝານ ອະເນກາ** ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈໃນການປະກອບສ່ວນຂອງ LXML ເພື່ອຝຶກອົບຮົມ ແລະ ພັດທະນາ ເພື່ອສ້າງຊີວິດການເປັນຢູ່ທີ່ດີຂຶ້ນຂອງຄົນຮຸ່ນໃໝ່". ທ່ານ ກ່າວຕື່ມອີກວ່າ "ທັກສະ ແລະ ປະສົບການທີ່ນັກສຶກສາໄດ້ຮັບ ຈະປະກອບສ່ວນໃນການດຳເນີນງານຂອງບໍ່ຄຳ-ທອງເຊໂປນ ແລະ ປະກອບສ່ວນໃສ່ການພັດທະນາ ສປປ ລາວ".

ນັບຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, ລຊມລ ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ໃສ່ການຝຶກອົບຮົມ, ໃຫ້ທຶນການສຶກສາ, ຊ່າງສີມື, ນັກຮຽນ ແລະ ນັກສຶກສາຝຶກງານ. ນັກສຶກສາຫຼາຍກວ່າ 105 ຄົນ ສຳເລັດການສຶກສາຈາກໂຄງການນັກສຶກສາຊ່າງສີມື ແລະ 36 ຄົນ ສຳເລັດການສຶກສາລະດັບອາຊີບຈາກຕ່າງປະເທດດ້ວຍທຶນການສຶກສາຂັ້ນສູງ.

ມາຮອດເດືອນມິຖຸນາ 2022, ລຊມລ ໄດ້ສະໜອງການຝຶກອົບຮົມໃຫ້ແກ່ພະນັກງານ ລາວກວ່າ 23,000 ຊົ່ວໂມງ ດ້ວຍການຝຶກອົບຮົມພາຍໃນ, ພາຍນອກ, ໃນໜ້າວຽກ ແລະ ຕ່າງປະເທດ, ໃນທ້າຍເຄິ່ງປີ 2022, LXML ຈະຟື້ນຟູຫຼັກສູດທີ່ເປັນທີ່ນິຍົມ ກໍ່ຄືໂຄງການພັດທະນາຫົວໜ້າຄຸມງານ ແລະ ການເປັນຜູ້ນຳ ເພື່ອສະໜັບສະໜູນນັກວິຊາການຂຸດຄົ້ນແຮ່ມືອາຊີບຮຸ່ນໃໝ່ຂອງ ສປປ ລາວ.

ບໍລິສັດ LXML ເປັນບໍລິສັດດຳເນີນການຂຸດຄົ້ນແຮ່ໜຶ່ງດຽວໃນ ສປປ ລາວ ທີ່ໄດ້ຮັບການຈັດອັນດັບ ປະເພດ A+ ຢ່າງຕໍ່ເນື່ອງ ຊຶ່ງອອກໃຫ້ໂດຍກະຊວງພະລັງງານ ແລະ ບໍ່ແຮ່ ສຳລັບຄວາມມຸ່ງໝັ້ນໃນການປະກອບສ່ວນຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ, ປົກປັກຮັກສາສິ່ງແວດລ້ອມ ແລະ ຮັກສາມາດຕະຖານການດຳເນີນງານໃນລະດັບສາກົນ.



# LXML ເຊໂປນ ຍ້ອງຍໍພະນັກງານ 434 ຄົນ ທີ່ເຮັດວຽກຍາວນານກັບບໍລິສັດ

ເພື່ອເປັນການຂ່ຳນັບຮັບຕ້ອນ ວັນຊາດ ທີ 2 ທັນວາ ປີ 2022, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ບໍ່ຄຳ-ທອງເຊໂປນ ໄດ້ຈັດພິທີຍ້ອງຍໍພະນັກງານ 434 ຄົນທີ່ໄດ້ເຮັດວຽກກັບບໍລິສັດມາໄດ້ຍາວນານແຕ່ 5 ເຖິງ 20 ປີ. ໃນນັ້ນ ມີພະນັກງານ 132 ຄົນທີ່ເຮັດວຽກກັບ LXML ມາໄດ້ 5ປີ, 55 ຄົນມາໄດ້ 15 ປີ, 8 ຄົນມາໄດ້ 20 ປີ ແລະ 1 ຄົນມາໄດ້ 25ປີ.




ພາບລວມພະນັກງານທີ່ໄດ້ຮັບໃບຍ້ອງຍໍທີ່ເຮັດວຽກກັບບໍລິສັດມາໄດ້ 20 ແລະ 25 ປີ ທີ່ຈັດຂຶ້ນເມື່ອວັນທີ 2 ທັນວາ 2022.

ໃນປີ 2023, LXML ຈະສະເຫຼີມສະຫຼອງ 20 ປີແຫ່ງການດຳເນີນການຂຸດຄົ້ນ-ຜະລິດແຮ່. ຕະຫຼອດອາຍຸການຂອງບໍ່ຄຳ-ທອງ ເຊໂປນ, ມີພະນັກງານກວ່າ 10.000 ຄົນທີ່ໄດ້ປະກອບສ່ວນຕໍ່ການເຕີບໂຕຂອງ LXML, ໄດ້ຮຽນຮູ້ຝຶກຝົນທັກສະວິຊາຊີບ ແລະ ສ້າງຊີວິດການເປັນຢູ່ທີ່ດີຂຶ້ນ.

ໃນຈຳນວນພະນັກງານ ແລະ ຜູ້ຮັບເໝົາທັງໝົດປະມານ 5.000 ຄົນ, 95% ແມ່ນຄົນລາວ, 75% ແມ່ນຄົນທ້ອງຖິ່ນ ແລະ 20% ແມ່ນແມ່ຍິງ. ໃນສອງ-ສາມທົດສະຫວັດຜ່ານມາ, LXML ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດເຂົ້າໃສ່ການພັດທະນາຊັບພະຍາກອນມະນຸດ ລວມທັງ ທຶນການສຶກສາ, ການລົງຝຶກງານກັບບໍລິສັດ, ແລະ ການຝຶກອົບຮົມຕົວຈິງ. LXML ສືບຕໍ່ສະໜັບສະໜູນຄວາມກ້າວໜ້າໃນອາຊີບການງານ ແລະ ຄວາມມຸ່ງໝັ້ນຂອງພະນັກງານເພື່ອສ້າງວິຊາການມືອາຊີບຄົນລາວ ເພື່ອຜົນປະໂຫຍດຂອງ ສປປ ລາວ.

**ທ່ານ ພໍ ແຮຣິສ໌, ປະທານ LXML** ໄດ້ກ່າວຕໍ່ຜູ້ໄດ້ຮັບໃບຍ້ອງຍໍ-ລາງວັນໃນປີນີ້ວ່າ: "ທັກສະ ແລະ ປະສົບການທີ່ພະນັກງານເກັບກ່ຽວໄດ້ໃນຊຸມປີຜ່ານມາແມ່ນມີຄຸນຄ່າຍິ່ງ. ທັກສະເຫຼົ່ານີ້ຈະເປັນ ຊັບສິນ-ມໍລະດົກຕິດໂຕພະນັກງານທຸກຄົນບໍ່ວ່າພວກເຂົາເຈົ້າຈະໄປເຮັດວຽກຢູ່ແຫ່ງໃດໃນ ສປປ ລາວ ກໍຕາມ. LXML ຈະສືບຕໍ່ລົງທຶນໃສ່ທຶນມະນຸດຂອງ ສປປ ລາວ ຜ່ານການຝຶກອົບຮົມ, ການຝຶກສອນໃນວຽກ ແລະ ຄວາມກ້າວໃນໃນອາຊີບການງານ."

ໃນເດືອນສິງຫາ, LXML ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບວິທະຍາໄລເຕັກນິກລາວ-ເຢຍລະມັນ ເພື່ອສະໜອງທຶນການຝຶກອົບຮົມນັກສຶກສາຊ່າງສີມືໃຫ້ແກ່ຊຸມຊົນອ້ອມຂ້າງບໍ່ຄຳ-ທອງ ເຊໂປນ ໃນເມືອງວິລະບູລີ. ນັກສຶກສາຈາກແຜນງານຝຶກອົບຮົມຊ່າງສີມືທີ່ຖືກຄັດເລືອກ ຈະໄດ້ຮັບການຝຶກອົບຮົມວິຊາຊີບໃນຂະແໜງການ ເຕັກໂນໂລຊີລົດຍົນ, ໄຟຟ້າເອເລັກໂຕຣນິກ, ຈັກກົນໂຮງງານ, ກົນຈັກໜັກ ແລະ ໂລຫະກຳວິທະຍາ. ພາຍຫຼັງສຳເລັດຫຼັກສູດການຝຶກອົບຮົມ, ນັກສຶກສາດັ່ງກ່າວກໍຈະມີໂອກາດໄດ້ເຂົ້າມາເຮັດວຽກກັບ LXML. ແຜນງານນີ້ແມ່ນຈະຈັດຕັ້ງປະຕິບັດໄປເຖິງປີ 2027.

ນັບຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, LXML ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ໃສ່ການຝຶກອົບຮົມ, ໃຫ້ທຶນການສຶກສາ, ແຜນງານຝຶກອົບຮົມຊ່າງສີມືແຮງງານ, ນັກຮຽນ ແລະ ນັກສຶກສາຝຶກງານ. ມີນັກສຶກສາຫຼາຍກວ່າ 105 ຄົນ ທີ່ໄດ້ສຳເລັດຫຼັກສູດການຝຶກອົບຮົມນັກສຶກສາຊ່າງສີມື ແລະ 36 ຄົນ ສຳເລັດການສຶກຂັ້ນສູງຈາກຕ່າງປະເທດ ເຊິ່ງເປັນທຶນທີ່ບໍລິສັດສະໜັບສະໜູນ.



ມາຮອດປັດຈຸບັນ, LXML ໄດ້ສະໜອງການຝຶກອົບຮົມໃຫ້ແກ່ພະນັກງານລາວກວ່າ 959.744 ຊົ່ວໂມງ ດ້ວຍການຝຶກອົບຮົມພາຍໃນ, ພາຍນອກ, ໃນໜ້າວຽກ ແລະ ຢູ່ຕ່າງປະເທດ. ໃນເດືອນ ມິຖຸນາ, LXML ໄດ້ຟື້ນຄືນຫຼັກສູດທີ່ເປັນທີ່ນິຍົມ ຄື ແຜນງານພັດທະນາຫົວໜ້າຄຸມງານ ແລະ ແຜນງານພັດທະນາການເປັນຜູ້ນຳ ເພື່ອສ້າງນັກວິຊາການຂຸດຄົ້ນແຮ່ມືອາຊີບຮຸ່ນໃໝ່ຂອງ ສປປ ລາວ.

ຕັ້ງແຕ່ເລີ່ມການດຳເນີນງານເປັນຕົ້ນມາ, ບໍ່ຄຳ-ທອງເຊໂປນໄດ້ປະກອບສ່ວນເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວກວ່າ US$1.6 ຕື້ ຈາກການຈ່າຍພາສີ-ອາກອນ, ຄ່າຊັບພະຍາກອນທຳມະຊາດ ແລະ ເງິນປັນຜົນ. ນອກຈາກນັ້ນຍັງໄດ້ປະກອບສ່ວນຫຼາຍຮ້ອຍລ້ານໂດລາສະຫະລັດເປັນຜົນປະໂຫຍດທາງອ້ອມ ຈາກການສ້າງວຽກເຮັດງານທຳ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ທຸລະກິດທ້ອງຖິ່ນ.

# ການຕ້ອນຮັບທີມງານ IMT ຊີເຟີງໂກລດ໌ ສູ່ ບໍ່ຄຳ-ທອງ ເຊໂປນ




ໃນເດືອນກັນຍາຜ່ານມາ, ໂຄງການເຊໂປນໄດ້ຕ້ອນຮັບສະມາຊິກໃນທີມງານຜູ້ບໍລິຫານຂອງ ຊີເຟີງ ໂກນ ແລະ ເປັນສ່ວນໜຶ່ງຂອງຫຼັກສູດຝຶກອົບຮົມຍົກລະດັບຄວາມສາມາດດ້ານບໍ່ແຮ່ລະດັບສາກົນ ຫຼື IMT. ທ່ານນາງ ດົນາ ດູ, ຜູ້ຈັດການຝ່າຍການເງິນ, ແອລວິສ ຄິວ, ຮອງຜູ້ຈັດການຝ່າຍຜະລິດ, ທ່ານ ແຮນຣີ ຊູ, ຜູ້ຈັດການຝ່າຍບໍລິຫານຂອງບໍລິສັດ, ແລະ ທ່ານນາງ ໄຊເຟຍ ຄິວ, ຜູ້ຈັດການຝ່າຍບຸກຄະລາກອນ ຈະມາລົງເຮັດວຽກຕົວຈິງ ຢູ່ພາກສະໜາມເຊໂປນ ເປັນເວລາ 3 ເດືອນ ເຊິ່ງເປັນສ່ວນໜຶ່ງຂອງຫຼັກສູດການຝຶກອົບຮົມຂອງເຂົາເຈົ້າທີ່ແນໃສ່ ຍົກສູງຄວາມເປັນມືອາຊີບ ແລະ ທັກສະດ້ານພາສາອັງກິດທີ່ກ່ຽວຂ້ອງກັບອຸດສາຫະກຳບໍ່ແຮ່.

ການຢ້ຽມຢາມບໍ່ຄຳ-ທອງ ເຊໂປນ ໃນຄັ້ງນີ້ ຈະຊ່ວຍໃຫ້ທີມງານ IMT ຮຽນຮູ້ການດຳເນີນງານ, ໃຊ້ເວລາເຮັດວຽກຕົວຈິງກັບແຕ່ລະພະແນກ ແລະ ທີມງານ ພ້ອມທັງແລກປ່ຽນຄວາມຮູ້ ແລະ ປະສົບການເຊິ່ງກັນ ແລະ ກັນ ເຊິ່ງການມາຢ້ຽມຢາມຄັ້ງນີ້ ຍິ່ງມີຄວາມໝາຍ ຍ້ອນເຂົາເຈົ້າຈະໄດ້ພົບພໍ້ ແລະ ຮຽນຮູ້ກ່ຽວກັບວັດທະນະທຳທີ່ຫຼາກຫຼາຍຢູ່ ພາກສະໜາມເຊໂປນ ກໍຄື ວັດທະນະທຳ, ອາຫານ ແລະ ການດຳລົງຊີວິດຂອງຄົນລາວ.

ທ່ານນາງ ໄຊເຟຍ, ຜູ້ຈັດການຝ່າຍບຸກຄະລາກອນຂອງຊີເຟີງ ໄດ້ກ່າວວ່າ: "ໃນໄລຍະທີ່ພວກເຮົາຢູ່ເຊໂປນ, ແຕ່ລະມື້ຈະຜ່ານໄປຢ່າງໄວ. ແຕ່ວ່າ, ພວກເຮົາກໍມີແຜນປະຈຳອາດທິດໄວ້ ແລະ ແຕ່ລະມື້ກໍຖືວ່າມ່ວນ ແລະ ສຳເລັດໄດ້ຫຼາຍຢ່າງ."

ກ່ອນການລົງມາຢ້ຽມຢາມຄັ້ງນີ້, ທີມງານ IMT ໄດ້ຜ່ານການຮຽນດ້ວຍຕົນເອງທາງອອນໄລນ໌ ສະເລ່ຍ 60 ຊົ່ວໂມງ ແລະ ຮຽນພາສາອັງກິດຢ່າງຂຸ້ນຂ້ຽວ ໂດຍມີຄູຝຶກຈາກແຕ່ລະພະແນກທີ່ກ່ຽວຂ້ອງ ກໍຄື ຊ່ຽວຊານຈາກພາຍນອກ.

# ການປັບປຸງຝາຍນາກະຊິນ ສົ່ງເສີມກະສິກຳ ແລະ ການຮັບປະກັນສະບຽງອາຫານ

**15 ສິງຫາ 2022,** ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ໄດ້ມອບຝາຍນາກະຊິນ ແລະ ລະບົບຊົນລະປະທານທີ່ໄດ້ຮັບການຍົກລະດັບ ແລະ ສ້ອມແປງ ເພື່ອສົ່ງເສີມການຜະລິດກະສິກຳ ແລະ ການຮັບປະກັນສະບຽງອາຫານໃຫ້ແກ່ປະຊາຊົນບ້ານນາກະຊິນ ແລະ ບ້ານເມືອງຫຼວງ ມູນຄ່າກວ່າ USD$73,230.




ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML (ກາງຂວາ) ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງ ວິລະບູລີ (ກາງຊ້າຍ) ທີ່ພິທີ ມອບຮັບໂຄງການ ເມື່ອວັນທີ 15 ສິງຫາ 2022.

ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ບໍລິສັດ LXML ໄດ້ມອບໂຄງການດັ່ງກ່າວໃຫ້ແກ່ອຳນາດການປົກຄອງບ້ານນາກະຊິນ ແລະ ບ້ານເມືອງຫຼວງ ໂດຍການເປັນສັກຂີພິຍານຂອງທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີຜູ້ໃໝ່.

ໃນເບື້ອງຕົ້ນ, ຝາຍນາກະຊິນໄດ້ຮັບການກໍ່ສ້າງ ແລະ ມອບໃຫ້ຊຸມຊົນນຳໃຊ້ ໃນວັນທີ 12 ສິງຫາ 2020 ໂດຍໄດ້ຮັບການສະໜອງທຶນຈາກກອງທຶນພັດທະນາທ້ອງຖິ່ນຂອງບໍລິສັດ LXML ມູນຄ່າ $US95,249. ເນື່ອງຈາກສະພາບຝົນຕົກໜັກເຮັດໃຫ້ຄັນຄູເກີດເຊາະເຈື່ອນ ແລະ ເສຍຫາຍ ຈຶ່ງເຫັນໄດ້ເຖິງຄວາມຈຳເປັນໃນການປັບປຸງ ເພື່ອສະໜັບສະໜູນການຜະລິດກະສິກຳໃນເຂດດັ່ງກ່າວ. ສະນັ້ນ ໃນວັນທີ 7 ມີນາ 2022 ຈຶ່ງໄດ້ເລີ່ມລົງມືສ້ອມແປງ ແລະ ຍົກລະດັບຝາຍດັ່ງກ່າວ.

ກອງທຶນພັດທະນາທ້ອງຖິ່ນມີຈຸດປະສົງໃນການປັບປຸງຊີວິດການເປັນຢູ່ຂອງຊຸມຊົນ ໂດຍການເຂົ້າເຖິງ ການບໍລິການພື້ນຖານ ແລະ ໃຫ້ສິດອຳນາດແກ່ປະຊາຊົນ ແລະ ເມືອງໃນການຈັດຕັ້ງ ແລະ ບັນລຸບູລິມະສິດການພັດທະນາຂອງຕົນເອງດ້ວຍການມີສ່ວນຮ່ວມ ແລະ ນຳພາຈາກຊຸມຊົນ. ໂຄງການສ້ອມແປງຝາຍນາກະຊິນ ແມ່ນໂຄງການຕົວແບບໃນການມີສ່ວນຮ່ວມຈາກຊຸມຊົນທ້ອງຖິ່ນ, ອຳນາດການປົກຄອງທ້ອງຖິ່ນດ້ວຍການປະກອບສ່ວນຢ່າງຫ້າວຫັນດ້ານແຮງງານ ແລະ ການປະກອບສ່ວນຫີນຈຳນວນ 1000 ແມັດກ້ອນ ຈາກບໍລິສັດທ້ອງຖິ່ນກໍ່ຄື ຫອມມາລາ.

ໃນງານຍັງໄດ້ມີການປ່ອຍປາກວ່າ 10,000 ໂຕ ລົງໃນເຂດວັງສະຫງວນ.

**ທ່ານ ສະໝານ ອະເນກາ** ກ່າວວ່າ: "ຂ້າພະເຈົ້າຫວັງວ່າ ອຳນາດການປົກຄອງເມືອງ, ອົງການຈັດຕັ້ງບ້ານ, ປະຊາຊົນ ແລະ ຜູ້ມີສ່ວນຮ່ວມທັງໝົດຈະຊ່ວຍກັນປົກປັກຮັກສາໂຄງການ, ອ່າງນ້ຳ, ຝາຍ, ແລະ ວັງສະຫງວນ. ການເປັນເຈົ້າຂອງໂຄງການເຫຼົ່ານີ້ຂອງຊຸມຊົນ ຈະຍືດອາຍຸການນຳໃຊ້ ແລະ ໃຫ້ປະໂຫຍດສູງສຸດ ແລະ ຍືນຍົງດ້ວຍການເພີ່ມຜົນຜະລິດດ້ານກະສິກຳ ແລະ ການຮັບປະກັນສະບຽງອາຫານ".

ການສະໜັບສະໜູນຂອງກອງທຶນພັດທະນາທ້ອງຖິ່ນ ແມ່ນບົນພື້ນຖານຂອງ 3 ເສົາຄ້ຳຫຼັກ - ການປັບປຸງການຮັບປະກັນສະບຽງອາຫານ, ສຸຂະພາບ ແລະ ການສຶກສາ ສຳລັບຄົນຮຸ່ນໃໝ່. ມາຮອດປະຈຸບັນ ກອງທຶນໄດ້ປະກອບສ່ວນກວ່າ $US11 ລ້ານ ເຂົ້າໃນການສ້າງໂຮງຮຽນ, ຖະໜົນຫົນທາງ, ຫ້ອງນ້ຳ, ໜອງປາ, ນ້ຳສະອາດ, ຕາໜ່າງໄຟຟ້າ ແລະ ໂຄງລ່າງພື້ນຖານການພັດທະນາອື່ນໆ ຊຶ່ງສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນໃນເມືອງວິລະບູລີ ຫຼາຍກວ່າ 40,000 ຄົນ.



# LXML ເຊໂປນ ລົງທຶນໃສ່ຄົນຮຸ່ນໃໝ່ ໃນເມືອງວິລະບູລີ



ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງ ວິລະບູລີ ແລະ ນ້ອງນັກຮຽນ ຮ່ວມຖ່າຍຮູບກຸ່ມ ຢູ່ທີ່ຫ້ອງວ່າການເມືອງ ວິລີບູລີ ເມື່ອ ວັນທີ 22 ກັນຍາ 2022.

**22 ກັນຍາ 2022,** ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ໄດ້ຮ່ວມກັບຫ້ອງການສຶກສາ ເມືອງວິລະບູລີ ຈັດພິທີ ມອບ-ຮັບ 3 ຫ້ອງຮຽນ ແລະ 2 ຫ້ອງນ້ຳ ມູນຄ່າ US$36.950 ໃຫ້ແກ່ ໂຮງຮຽນ ມ.ສ ພູຄຳ, ບ້ານ ບຸ່ງຄຳ, ເມືອງ ວິລະບູລີ, ແຂວງສະຫວັນນະເຂດ ເຊິ່ງເປັນທີ່ຕັ້ງຂອງ ໂຄງການຂຸດຄົ້ນ-ຜະລິດຄຳ-ທອງ ເຊໂປນ. ໃຫ້ກຽດເປັນປະທານພິທີ ໂດຍ ທ່ານ ຮອງເຈົ້າເມືອງວິລະບູລີ, ທ່ານ ບຸນເນືອງ ຈັນທອມ, ຜູ້ຕາງໜ້າ LXML, ບັນດາແຂກຖືກເຊີນ, ຄູອາຈານ ແລະ ນ້ອງນັກຮຽນເຂົ້າຮ່ວມ.

ໃນວັນດຽວກັນນີ້, ຫ້ອງການຖະແຫຼງຂ່າວ ແລະ ວັດທະນະທຳເມືອງວິລະບູລີ ແລະ LXML ກໍໄດ້ຈັດພິທີປິດໂຄງການສົ່ງເສີມນັກຮຽນຝຶກອົບຮົມສິນລະປະດົນຕີພື້ນເມືອງ ໂດຍການໃຫ້ກຽດເຂົ້າຮ່ວມຂອງ ຂອງ ທ່ານເຈົ້າເມືອງວິລະບູລີ ທ່ານ ວາລີຍະ ສີຈັນທອງທິບ. LXML ໄດ້ສະໜັບສະໜູນທຶນ ແລະ ເຄື່ອງດົນຕີໃຫ້ແກ່ນັກຮຽນຢູ່ເມືອງວິລະຍູລີ ໄດ້ຮຽນສິນລະປະດົນຕີພື້ນເມືອງ ເພື່ອອະນຸລັກມໍລະດົກວັດທະນະທຳອັນລ້ຳຄ່ານີ້ໄວ້. ມາຮອດປັດຈຸບັນ, LXML ໄດ້ສະໜັບສະໜູນທຶນ US$10.000 ເຂົ້າໃສ່ໂຄງການນີ້, ເຊິ່ງໄດ້ສ້າງໂອກາດໃຫ້ແກ່ນັກດົນຕີໜຸ່ມນ້ອຍຄົນລາວ 30 ນ້ອງນັກຮຽນ.

ກອງທຶນພັດທະນາຊຸມຊົນຂອງ LXML ໄດ້ສະໜອງທຶນ US$750,000 ຕໍ່ປີ ເພື່ອສະໜັບສະໜູນຊຸມຊົນອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ ໂດຍສຸມໃສ່ 3 ເສົາຫຼັກທີ່ສຳຄັນຄື: ການຮັບປະກັນດ້ານສະບຽງອາຫານ ແລະ ການຜະລິດກະສິກຳເປັນສິນຄ້າ (30% ຂອງກອງທຶນ); ການສຶກສາ, ທຶນການສຶກສາໃຫ້ແກ່ນັກຮຽນເກັ່ງ ແລະ ນະໂຍບາຍຕໍ່ນັກຮຽນດ້ອຍໂອກາດ (25%); ແລະ ການສົ່ງເສີມສຸກຂະພາບພື້ນຖານໃຫ້ແກ່ຊຸມຊົນ (20%). ສ່ວນທຶນທີ່ເຫຼືອແມ່ນຈະຖືກຈັດສັນເຂົ້າໃສ່ໂຄງການພັດທະນາອື່ນໆ ໂດຍອີງຕາມການປຶກສາຫາລືກັບຊຸມຊົນທ້ອງຖິ່ນ ລວມໄປເຖິງກອງທຶນບັນເທົາໄພພິບັດຈຳນວນ US$25.000 ຕໍ່ປີ ເຊິ່ງ ຜ່ານມາແມ່ນໄດ້ນຳໃຊ້ໃນໄລຍະເກີດ ການແຜ່ລະບາດພະຍາດໂຄວິດ-19 ແລະ ໄພນ້ຳຖ້ວມຕ່າງໆ.

ມາຮອດປັດຈຸບັນ, LXML ໄດ້ລົງທຶນ US$11 ລ້ານ ໃນເມືອງວິລະບູລີຜ່ານກອງທຶນພັດທະນາຊຸມຊົນ ແລະ ໂຄງການພັດທະນາຊຸມຊົນອື່ນໆ ອັນໄດ້ສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນ ແລະ ຄອບຄົວຂອງເຂົາເຈົ້າ ກວ່າ 40 000 ຄົນ ຜ່ານການກໍ່ສ້າງໂຄງລ່າງພື້ນຖານສຳຄັນ ກໍຄືການສະໜັບສະໜູນ ແລະ ການບໍລິການຕ່າງໆ. ຫຼາຍທົດສະວັດກ່ອນນ້ານີ້, ເມືອງວິລະບູລີ ຖືກຈັດເປັນເມືອງທີ່ "ທຸກຍາກທີ່ສຸດ", ແຕ່ຍ້ອນການມີວຽກເຮັດງານທຳ, ການຄ້າ, ແລະ ການພັດທະນາຊຸມຊົນ, ເມືອງດັ່ງກ່າວກໍໄດ້ກາຍເປັນເມືອງທີ່ຟົດຟື້ນ ແລະ ມີການຂະຫຍາຍໂຕ.






ພິທີມອບ-ຮັບ ໂຄງການກໍ່ສ້າງຫ້ອງຮຽນ ແລະ ຫ້ອງນ້ຳໃຫ້ແກ່ ໂຮງຮຽນ ມສ ພູຄຳ, ບ້ານບຸ່ງຄຳ, ເມືອງວິລະບູລີ, ແຂວງສະຫວັນນະເຂດ ໃນວັນທີ 22 ກັນຍາ 2022.

# ຊຸມຊົນທ້ອງຖິ່ນ-ເຈົ້າພາບ ຢ້ຽມຢາມໂຄງການສຳຫຼວດບໍ່ແຮ່ໃຕ້ດິນ ຂອງ ເຊໂປນ

4 ພຶດສະພາ 2022 - ຄະນະບ້ານ ແລະ ຕາງໜ້າອຳນາດການປົກຄອງທ້ອງຖິ່ນ 4 ທ່ານ ຈາກບ້ານເມືອງຫຼວງ ແລະ ເມືອງວິລະບູລີ ໄດ້ໃຫ້ກຽດມາຢ້ຽມຢາມການສຳຫຼວດບໍ່ແຮ່ໃຕ້ດິນ ຂອງໂຄງການຂຸດຄົ້ນບໍ່ຄຳ-ທອງ ເຊໂປນ ເພື່ອຕິດຕາມກວດກາ ແລະ ຮັບຮູ້ວິທີການດຳເນີນການສຳຫຼວດບໍ່ໃຕ້ດິນ ແລະ ຜົນກະທົບທີ່ອາດເກີດຂຶ້ນ. ບ້ານເມືອງຫຼວງ ຕັ້ງຢູ່ຫ່າງຈາກເໝືອງຂຸດຄົ້ນບໍ່ດິສໂກເວີຣີ ຂອງບໍ່ຄຳ-ທອງເຊໂປນທີ່ເປັນບ່ອນເຈາະທາງເຂົ້າອຸບໂມງສຳຫຼວດບໍ່ແຮ່ ປະມານ 2 ກິໂລແມັດ. ຄະນະຢ້ຽມຢາມໃນຄັ້ງນີ້ ໄດ້ມີໂອກາດໄດ້ຮູ້-ເຫັນຂັ້ນຕອນລະເບີດຫີນ ເພື່ອເຂົ້າໄປໃນບໍ່ແຮ່ໃຕ້ດິນ ພາຍຫຼັງໄດ້ມີການກວດທາງເຂົ້າໄປສູ່ອຸບໂມງ.


ເຈົ້າໜ້າທີ່ທ້ອງຖິ່ນ ຢູ່ທີ່ປາກອຸມົງທາງເຂົ້າບໍ່ໃຕ້ດິນ.

ທ່ານ ພອນໄຊ ວອນວິມານ, ນາຍບ້ານໆເມືອງຫຼວງ ໄດ້ກ່າວວ່າ: "ໃນປັດຈຸບັນ, ເຫັນວ່າ: ສຽງ ແລະ ການສັ່ນສະເທືອນແມ່ນແຕ່ໄດ້ຍິນໄປເຖິງບ້ານຂອງພວກຂ້າພະເຈົ້າ ໃນລະດັບທີ່ເບົາບາງຫຼາຍ. ຈາກການໄດ້ເຫັນເອງກັບຕາ ຂະບວນການລະເບີດຫີນ ແລະ ການເຂົ້າໄປໃນອຸມົງ, ຂ້າພະເຈົ້າກໍ່ມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບຂະບວນການຂຸດຄົ້ນບໍ່ແຮ່ໃຕ້ດິນ ແລະ ຈະຊ່ວຍອະທິບາຍພ້ອມທັງຈະແກ້ໄຂຂໍ້ຂ້ອງໃຈທີ່ຊຸມຊົນ ທີ່ອາດຍົກຂຶ້ນ ຢ່າງສ້າງສັນ. ໃນໄລຍະຕໍ່ໄປພວກຂ້າພະ ເຈົ້າຈະມາຢ້ຽມຢາມອີກຄັ້ງເມື່ອການກໍ່ສ້າງອຸມົງ ມີຄວາມຄືບໜ້າ."

ໃຫ້ກຽດເປັນເຈົ້າພາບຂອງການຢ້ຽມຢາມໃນຄັ້ງນີ້ມີ ປະທານບໍລິສັດ ຊີເຟິງ ລຊມລ ທ່ານ ຝູ ເຊຍເຊິນ, ຜູ້ຈັດການດ້ານການຂຸດຄົ້ນບໍ່ແຮ່ໃຕ້ດິນ ທ່ານ ເຈສັນ ຄາຍລີ້.

ທ່ານ ເຈສັນ ໄດ້ກ່າວວ່າ: "ພວກເຮົາຈັດຕັ້ງປະຕິບັດ ວິທີການກໍຄື ຫຼັກການພາກປະຕິບັດທີ່ດີທີ່ສຸດ ເພື່ອຫລຸດຜ່ອນຜົນກະທົບຕໍ່ຊຸມຊົນ ໂດຍໃຫ້ມີໜ້ອຍທີ່ສຸດ. ພວກເຮົາສືບຕໍ່ເຮັດວຽກຢ່າງໃກ້ຊິດກັບຊຸມຊົນເຈົ້າພາບ ແລະ ເຈົ້າໜ້າທີ່ເມືອງ ເພື່ອແກ້ໄຂຂໍ້ຂ້ອງໃຈ, ປູກຈິດສຳນຶກ-ເຜີຍແຜ່ຂໍ້ມູນຂ່າວສານ ແລະ ຮັບປະກັນໃຫ້ກິດຈະການຂຸດຄົ້ນບໍ່ແຮ່ ໄດ້ມີການແບ່ງປັນຜົນປະໂຫຍດຮ່ວມກັນຢ່າງທົ່ວເຖິງ"

ການສຳຫຼວດບໍ່ແຮ່ໃຕ້ດິນ ຈະສະໜັບສະໜູນອະນາຄົດຂອງບໍ່ຄຳ-ທອງ ເຊໂປນ ແລະ ປະກອບສ່ວນຕໍ່ກັບການເຕີບໂຕທາງດ້ານເສດຖະກິດ-ສັງຄົມຂອງ ສປປ ລາວ ສູ່ປີ 2033 ເປັນຢ່າງຕ່ຳ. ບໍລິສັດ ຊີເຟິງ LXML ມີແຜນຂຸດຄົ້ນບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດ ໃນ ສປປ ລາວ ໂດຍຈະຖ່າຍທອດຄວາມຊຳນິຊຳນານງານ ແລະ ເຕັກນິກສະເພາະໃຫ້ແກ່ບຸກຄະລາກອນວິຊາການ ທີ່ເປັນຄົນລາວ ກໍຄື ສປປ ລາວ.


ວັນທີ 31 ສິງຫາ 2022, ທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີກະຊວງການເງິນ ພ້ອມດ້ວຍຄະນະຈາກສູງກາງ ແລະ ແຂວງສະຫວັນນະເຂດ ຢ້ຽມຢາມບໍ່ຄຳ-ທອງ ເຊໂປນ ຢ່າງເປັນທາງການ ເພື່ອຕິດຕາມຄວາມຄືບໜ້າຂອງການດຳເນີນງານ ແລະ ການສືບຕໍ່ປະກອບສ່ວນດ້ານສັງຄົມ ແລະ ການເງິນ ຂອງບໍລິສັດ ຕໍ່ ສປປ ລາວ.


ວັນທີ 22 ສິງຫາ 2022, ທ່ານ ພໍ ເຄນລີ້, ເອກອັກຄະລັດຖະທູດອົດສະຕຣາລີ ປະຈຳ ສປປ ລາວ ໄດ້ລົງຢ້ຽມຢາມບໍ່ຄຳ-ທອງເຊໂປນ ແລະ ໂຄງການພັດທະນາຕ່າງໆຂອງບໍລິສັດ


ພະນັກງານ LXML ໄດ້ປູກຕົ້ນໄມ້ຫຼາຍກວ່າ 500 ຕົ້ນຮ່ວມກັບ ຊຸມຊົນເນື່ອງໃນໂອກາດ ວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ. ລຊມລ ໄດ້ປູກຕົ້ນໄມ້ 8,500 ຕົ້ນ ຢູ່ອ້ອມຂ້າງ ເຊໂປນ ໃນໄລຍະ ດຳເນີນກິດຈະກຳຟື້ນຟູ


ທ່ານ ຫວາງ ຈ້ຽນຫົວ, ປະທານບໍລິສັດຊີເຟິງ ຂຸດຄົ້ນຄຳ ໄດ້ຢ້ຽມຢາມອຸມົງເພື່ອສຳຫຼວດແຮ່ໃຕ້ດິນ ເຊິ່ງ ໄດ້ເຈາະໄປໄດ້ປະມານ 265 ແມັດ.


ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ທ່ານ ທອງພັດ ອິນທະວົງ ພ້ອມຄະນະ ໄດ້ຢ້ຽມຢາມ ຈຸດວາງສະແດງຂອງ LXML ທີ່ຈັດຂຶ້ນ ໃນວາລະກອງປະຊຸມປະຈຳປີຂອງກະຊວງ ທີ່ ຫໍປະຊຸມແຫ່ງຊາດ ໃນວັນທີ 3 ກຸມພາ 2023.



ຮອງອຳນວຍການ LXML ທ່ານ ຈັນທອນ ເນົາວະລາດ ມອບ ເງິນອຸປະຖຳກອງປະຊຸມປະຈຳປີຂອງ ກະຊວງພະລັງງານ ແລະ ບໍ່ແຮ່ ຮັບໂດຍ ຫົວໜ້າຫ້ອງການ ທ່ານ ຄຳໂສ ກຸໂພຄຳ


ໃນວັນທີ່ 30 ກໍລະກົດ 2022, ແມ່ຍິງ 30 ຄົນ ຈາກສະຫະພັນແມ່ຍິງ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ເຮັດກິດຈະກຳທັດສະນະສຶກສາ ແລະ ແລກປ່ຽນບົດຮຽນທີ່ ບໍ່ຄຳ-ທອງເຊໂປນ


ທີມງານຮັບມືກັບເຫດການສຸກເສີນ ແລະ ຄວາມປອດໄພ ໄດ້ສຳເລັດການຝຶກອົບຮົມການກູ້ຊີບກູ້ໄພ ຢູ່ໃນບໍ່ໃຕ້ດິນ ລະຫວ່າງວັນທີ 27-28 ສິງຫາ 2022.


LXML ບໍລິຈາກເຂົ້າສານໜຽວ 500ກກ ໃຫ້ແກ່ ສະມາຄົມຄົນພິການແຫ່ງຊາດລາວ




ທີມງານ ສຸຂະພາບແຮງງານ ແລະ ສຸຂະອານະໄມ ແລະ ພົວພັນຊຸມຊົນ ຢ້ຽມຢາມຫົວໜ່ວຍທຸລະກິດທ້ອງຖິ່ນ


ສູນອອກກຳລັງກາຍ LXML ອະນາໄມ 3 ເທື່ອຕໍ່ທິດ


ຝຶກອົບຮົມປະຖົມພະຍາບານຂັ້ນຕົ້ນ


ຄະນະ ຜູ້ບໍລິຫານ ແລະ ທີ່ປຶກສາ ຂອງ LXML


LXML ມອບຄອມພິວເຕີ 2 ເຄື່ອງໃຫ້ກົມຄຸ້ມຄອງບໍ່ແຮ່


LXML ເຊໂປນສະໜັບສະໜູນຜູ້ປະສົບໄພໄຟໄໝ້


ຝຶກອົບຮົມພັດທະນາຜູ້ຄຸມງານ


ສະເຫຼີມສະຫຼອງວັນແມ່ຍິງສາກົນ

# ເຊໂປນຈັດກອງປະຊຸມປຶກສາຫາລືເປີດກວ້າງກ່ຽວກັບການ ຂະຫຍາຍໂຄງການຄຳ

**14-15 ມີນາ** 2023, ໂດຍການຮ່ວມມືກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ), ອົງການ ເອີດ ຊີສເຕີມ, ແລະ LXML ໄດ້ປະສານງານຈັດກອງປະຊຸມປຶກສາຫາລືເປີດກວ້າງ ສຳລັບໂຄງການຂະຫຍາຍຈຳນວນໜຶ່ງຂອງ ບໍ່ຄຳ-ທອງເຊໂປນ.

ຜູ້ເຂົ້າຮ່ວມໄດ້ທົບທວນຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການຂະຫຍາຍໃໝ່ ລວມທັງ ອຸບມຸງສຳຫຼວດບໍ່ແຮ່ໃຕ້ດິນ ພື້ນທີ່ຂຸດຄົ້ນບໍ່ແຮ່. ການນຳຊຸມຊົນໄດ້ຍົກຄວາມກັງວົນກ່ຽວກັບໂຄງການ ໃນກອງປະຊຸມເປີດກວ້າງດັ່ງກ່າວ ທີ່ໄດ້ຈັດຂຶ້ນທີ່ຫ້ອງວ່າການເມືອງວິລະບູລີ.

ປະເດັນທີ່ຍົກຂຶ້ນລວມມີ ຄຸນນະພາບນ້ຳ ແລະ ການເຂົ້າເຖິງນ້ຳສະອາດ, ການຍົກລະດັບດ້ານການປັບປັບປຸງ ໂຄງລ່າງພື້ນຖານຕ່າງໆ ເຊັ່ນ ເສັ້ນທາງ 28A ແລະ ຄວາມກັງວົນກ່ຽວກັບຄວາມປອດໄພ.

LXML ຮັບຮູ້ຄວາມສຳຄັນຂອງການຮ່ວມມືຢ່າງໃກ້ຊິດກັບຊຸມຊົນອ້ອມຂ້າງບໍ່ຄຳ-ທອງ ເຊໂປນ ກ່ຽວກັບ ຜົນປະໂຫຍດ ແລະ ຜົນກະທົບຕ່າງໆ ທີ່ອາດຈະເກີດຂຶ້ນ ຈາກໂຄງການພວກເຮົາ.



*ພະນັກງານລັດຖະບານ ແລະ LXML ຮ່ວມກັນຖ່າຍຮູບກຸ່ມຢູ່ຕໍ່ໜ້າໂຮງງານຄຳ.*

**US$1.7ລ**
ລາຍຮັບໃຫ້ແກ່ ສປປ ລາວ

**US$56ລ**
ເກັບກູ້ລະເບີດບໍ່ທັນແຕກ

**US$55ລ**
ພັດທະນາພື້ນຖານໂຄງລ່າງ

**US$50ລ**
ລາຍໄດ້ຂອງຊຸມຊົນ

**US$20ລ**
ພັດທະນາຊຸມຊົນ

**US$20ລ**
ບໍລິຫານຈັດການສິ່ງແວດລ້ອມ

**US$1.8ລ**
ອານຸລັກມໍລະດົກວັດທະນະທຳ

**US$5ລ**
ປະຊາສຳພັນດ້ານ ສຸ ຂະພາບ ແລະ ສຸຂະອານາໄມ ແມ່ ແລະ ເດັກ

**US$4ລ**
ທຶນການສຶກສາຊັ້ນສູງຢູ່ຕ່າງປະເທດແກ່ພະນັກງານລາວ

**US$1ລ**
ອານຸລັກຊີວະນານາພັນ

**95%**
ຂອງແຮງງານແມ່ນຄົນລາວ

**25%**
ຂອງແຮງງານແມ່ນເພດຍິງ

**20**
ສັນຊາດຂອງກຳລັງແຮງງານ

**33,000**
ຄົນໄດ້ຮັບການຝຶກອົບຮົມ

**46,139**
ຊົ່ວໂມງຝຶກອົບຮົມ/ປີໃຫ້ແກ່ພະນັກງານ

**100%**
ປະຕິບັດຕາມແຜນການຕິດຕາມກວດກາຄຸນນະພາບນ້ຳ

**452ຮຕ**
ພື້ນທີ່ໄດ້ຮັບການຟື້ນຟູ

**ZERO**
ເສຍຊີວິດ & ເຫດການຮ້າຍແຮງ TRIFR

## ຜົນປະໂຫຍດໂດຍກົງ ໃຫ້ແກ່ລັດຖະບານ ລາວ

| ປະເພດລາຍຈ່າຍ | 2003 | 2004 | 2005 | 2006 | 2007 | 2008 | 2009 | 2010 | 2011 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ອາກອນກຳໄລ | - | - | 7,085 | 49,597 | 90,416 | 77,982 | 57,519 | 92,273 | 145,250 | 120,200 | 91,045 | 71,339 | 36,151 | - | - | - | 2,000 | 2,200 | 13,348 | 14,682 |
| ຄ່າຊັບພະຍາກອນ (ຄຳ) | 1,407 | 1,669 | 3,112 | 4,376 | 3,347 | 3,549 | 4,732 | 5,800 | 5,024 | 5,491 | 2,538 | 29 | - | - | - | - | - | 3,500 | 14,819 | 17.400 |
| ຄ່າຊັບພະຍາກອນ (ທອງ) | - | - | 4,055 | 16,994 | 19,295 | 18,570 | 14,565 | 20,734 | 31,365 | 30,378 | 30,607 | 27,579 | 22,093 | 17,226 | 17,533 | 20,989 | 19,061 | 11,007 | 2,367 | 2.627 |
| ອາກອນລາຍໄດ້ | 1,101 | 1,538 | 1,943 | 1,947 | 2,727 | 3,893 | 3,377 | 5,053 | 5,055 | 5,877 | 5,728 | 4,404 | 3,767 | 2,644 | 2,511 | 2,562 | 2,332 | 2,549 | 2,967 | 3.397 |
| ຄ່າສຳປະທານທີ່ດິນ | 5 | 33 | 33 | 33 | - | - | 113 | - | 90 | - | 145 | 50 | 50 | 49 | 49 | 49 | 61 | 61 | 61 | 61 |
| ພາສີນ້ຳມັນ+ນ້ຳມັນເຄື່ອງ | - | - | 2,000 | 2,000 | 2,000 | 4,200 | 2,000 | 2,500 | 4,835 | 4,822 | 4,152 | 3,863 | 4,360 | 2,686 | 3,920 | 3,786 | 4,695 | 6,932 | 6,683 | 10,946 |
| ເງິນປັນຜົນ | - | - | - | - | 9,303 | 11,300 | 2,000 | 32,900 | 15,000 | 28,500 | 10,000 | 10,000 | 6,500 | - | - | 27,170 | - | - | - | 5,917 |
| ລາຍຮັບລວມຈ່າຍໃຫ້ລັດຖະບານລາວ | 2,508 | 3,207 | 18,228 | 74,947 | 127,087 | 122,994 | 84,306 | 159,259 | 205,639 | 189,133 | 144,215 | 117,265 | 72,871 | 26,122 | 24,014 | 54,559 | 28,597 | 26,838 | 40,843 | 55,033 |
| ລວມທັງໝົດ | - | - | - | - | - | - | 433,278 | 592,536 | 798,176 | 987,309 | 1,131,525 | 1,248,789 | 1,328,966 | 1,364,449 | 1,388,463 | 1,443,022 | 1,471,619 | 1,498,457 | 1,553,035 | 1,613,723 |

ຕົວເລກທັງໝົດເປັນ US$ ຫົວພັນ ('000)

**ຕິດຕໍ່ພວກເຮົາ:**
**T:** +856 21 268 226
**E:** lxml.infomation@lxml.la

CHIFENG GOLD | SEPON